DVV International

Education for Everyone. Worldwide.
Lifelong.

ການ ຮ່ວມມື
ເຢຍລະມັນ
DEUTSCHE ZUSAMMENARBEIT

ຈົດໝາຍຂ່າວ

# ການຮຽນຮູ້ຕະຫຼອດຊີວິດ & ການສຶກສານອກໂຮງຮຽນ

## ໃນ ສປປ ລາວ ແລະ ອາຊີຕາເວັນອອກສ່ຽງໃຕ້




ສະບັບທີ

1- 2020


ສະໜັບສະໜູນໂດຍ

Federal Ministry
for Economic Cooperation
and Development

DVV International

Education for Everyone. Worldwide.
Lifelong.



ສະບາຍດີທ່ານຜູ້ອ່ານ ທີ່ຮັກແພງ,

ບໍ່ຕ້ອງສົງໃສເລີຍວ່າພວກເຮົາເຄີຍມີຊ່ວງເວລາທີ່ງ່າຍກວ່ານີ້. ໃນໄລຍະ 2-3 ເດືອນຜ່ານມາ ຫຼາຍຄົນຄົງຈະບໍ່ຄິດວ່າໂລກຂອງພວກເຮົາຈະປ່ຽນໄປໃນລັກສະນະນີ້ຕອນກາງປີ 2020?

ຂ້າພະເຈົ້າຍັງຈຳໄດ້ດີຕອນທີ່ໄດ້ອ່ານຂ່າວກ່ຽວກັບ ໂຄໂຣນາໄວຣັສ ເທື່ອທຳອິດໃນເດືອນມັງກອນ; ຂ້າພະເຈົ້າໄດ້ໄປຢ້ຽມຢາມຫ້ອງການຂອງພວກເຮົາທີ່ເມືອງນອງ ແລະ ໄດ້ອ່ານຂ່າວ ກ່ຽວກັບໄພຄຸກຄາມຕໍ່ລະບົບສາລະນະສຸກຂອງປະເທດຈີນທີ່ຫາກໍ່ຖືກຄົ້ນພົບ ແລະ ເບິ່ງຄືວ່າຈະແຜ່ລະບາດຢ່າງໄວວາ. ຢ່າງໃດກໍ່ຕາມ, ຂ້າພະເຈົ້າຍັງຄິດວ່າສິ່ງທີ່ຫຼາຍຄົນກັງວົນມັນເປັນເລື່ອງທີ່ຢູ່ໄກໂຕພວກເຮົາ.

ຕອນນີ້ຮູ້ແລ້ວວ່າມັນເປັນພຽງການຫຼອກລວງ. ການແຜ່ລະບາດຂອງໂຄໂຣນາໄວຣັສເຮັດໃຫ້ການດຳລົງຊີວິດຂອງພວກເຮົາປ່ຽນແປງໄປຫຼາຍ ແລະ ແນ່ນອນມັນສົ່ງຜົນກະທົບກັບການດຳເນີນວຽກງານຂອງພວກເຮົາ - ສຳລັບພວກເຮົາ ດີວີວີ ອິນເຕີເນເຊີນແນວ ແຕ່ພວກເຮົາຍັງຄົງມີຄວາມສະໝ່ຳສະເໝີກັບຄູ່ຮ່ວມງານ ແລະ ທຸກຄົນໃນການດຳເນີນວຽກງານສົ່ງເສີມການສຶກສານອກໂຮງຮຽນ ແລະ ການສຶກສາຜູ້ໃຫຍ່. ນີ້ເຮັດໃຫ້ພວກເຮົາຕົກຢູ່ໃນສະພາບຫຍຸ້ງຍາກ: ປະການທຳອິດ, ການສຶກສາຜູ້ໃຫຍ່ແມ່ນມີຄວາມຈຳເປັນຫຼາຍກວ່າທີ່ຜ່ານມາ. ໃນຊ່ວງເວລາດັ່ງກ່າວ, ຂະນະທີ່ການໃຊ້ຊີວິດໃນສັງຄົມເກືອບວ່າຢຸດຊະງັກປະຊາຊົນມີຄວາມຕ້ອງການ ການສຶກສາ. ປະການທີສອງ, ການສຶກສາ ສາມາດຊ່ວຍປ້ອງກັນໄວຣັສບໍ່ໃຫ້ແຜ່ກະຈາຍຕໍ່ໄປ ແລະ ສາມາດຊ່ວຍໃຫ້ປະຊາຊົນມີຄວາມເຂົ້າໃຈທີ່ດີຂຶ້ນກ່ຽວກັບມາດຕະການທີ່ຈຳເປັນໃນການຕໍ່ສູ້ກັບໄວຣັສ. ດັ່ງທີ່ເຮົາເຫັນໄດ້ຊັດເຈນວ່າຂ່າວລື ແລະ ຂໍ້ມູນປອມນັ້ນມັນແຜ່ກະຈາຍງ່າຍດາຍພຽງໃດ. ແລະ ຍິ່ງຄົນມີການສຶກສາຫຼາຍເທົ່າໃດກໍ່ຈະເຊື່ອຂໍ້ມູນປອມເຫຼົ່ານັ້ນໜ້ອຍລົງ.

ສະນັ້ນການສຶກສາຈະເຂົ້າເຖິງຜູ້ທີ່ເປັນກຸ່ມເປົ້າໝາຍເກົ່າຂອງການສຶກສານອກໂຮງຮຽນແນວໃດ? ຜູ້ທີ່ດ້ອຍໂອກາດຢູ່ແລ້ວ ແລະ ຖ້າສະຖານະການຮ້າຍແຮງລົງ ກຸ່ມນີ້ຈະເປັນກຸ່ມທີ່ໄດ້ຮັບຜົນກະທົບຫຼາຍທີ່ສຸດບໍ່? ໃນບາງປະເທດການສຶກສາດິຈິຕອນອາດເປັນກຸນແຈສຳຄັນ, ແຕ່ໃນສູນການຮຽນຮູ້ຊຸມຊົນໃນເຂດຊົນນະບົດຂອງປະເທດລາວ ເຊັ່ນທີ່ພວກເຮົາໄດ້ສະໜັບສະໜູນໃນເມືອງນອງ ແລະ ເມືອງເຊໂປນ ເບິ່ງຄືວ່າບໍ່ແມ່ນທາງເລືອກທີ່ເປັນໄປໄດ້ທີ່ສຸດ. ແຕ່ພວກເຮົາບໍ່ຮູ້ວ່າສະຖານະການແບບນີ້ຈະດຳເນີນໄປອີກດົນປານໃດ, ພວກເຮົາຕ້ອງເບິ່ງວ່າພວກເຮົາສາມາດເຮັດຫຍັງໄດ້ແນ່. ພວກເຮົາເລີ່ມຕົ້ນດ້ວຍການຜະລິດໜ້າກາກອະນາໄມກັບສູນການຮຽນຮູ້ຊຸມຊົນ. ໃຊ້ເວລາດົນພໍສົມຄວນຈຶ່ງຮູ້ວ່າໜ້າກາກອະນາໄມນັ້ນຂາດແຄນໃນທົ່ວໂລກ. ສະນັ້ນ, ຖ້າການສຶກສານອກໂຮງຮຽນສາມາດປະກອບສ່ວນເພື່ອຫຼຸດຜ່ອນການຂາດແຄນນີ້ມັນກໍ່ຈະເປັນຜົນສຳເລັດທີ່ດີງາມ. ແລະ ໃນໄລຍະຍາວ ນີ້ອາດຈະກາຍເປັນກິດຈະກຳສ້າງລາຍໄດ້ໃຫ້ແກ່ສູນການຮຽນຮູ້ຊຸມຊົນ. ໃນເວລານີ້, ພວກເຮົາຍັງຈະຊອກຫາ ແລະ ພັດທະນາວິທີການອື່ນໆເພື່ອຕອບສະໜອງຕາມຄວາມຕ້ອງການຂອງປະຊາຊົນ.

ໃນຂະນະດຽວກັນ, ໂດຍຜ່ານຈົດໝາຍຂ່າວນີ້, ພວກເຮົາຕ້ອງການແບ່ງປັນວິທີການຕ່າງໆ ທັງຈາກເຢຍລະມັນ ແລະ ຫວຽດນາມ. ແລະ ສຸດທ້າຍ, ຍັງມີຄວາມສຳເລັດບາງຢ່າງທີ່ເຮົາບໍ່ຄວນເກັບງຽບ: ດຳລັດວ່າດ້ວຍການຮຽນຮູ້ຕະຫຼອດຊີວິດໄດ້ຖືກຮອງຮັບຈາກພະນະທ່ານນາຍົກລັດຖະມົນຕີແຫ່ງ ສປປ ລາວ ນີ້ແມ່ນຂ່າວດີສຳລັບພວກເຮົາ ແລະຄູ່ຮ່ວມງານ. ເປັນທີ່ໜ້າເສຍດາຍທີ່ພວກເຮົາບໍ່ສາມາດສະເຫຼີມສະຫຼອງຫຼືເປີດໂຕດຳລັດຢ່າງເປັນທາງການໄດ້ ແຕ່ພວກເຮົາຈະຕິດຕາມເລື່ອງນີ້ທັນທີທີ່ສະຖານະການເອື້ອອຳນວຍ.

ສິ່ງສຳຄັນທີ່ສຸດ, ຂ້າພະເຈົ້າຫວັງວ່າທຸກໆທ່ານຈະມີສຸຂະພາບແຂງແຮງ. ຂໍໃຫ້ທຸກຄົນພະຍາຍາມສຸດຄວາມສາມາດໃນການຕໍ່ສູ້ກັບໄວຣັສ ແລະ ສະແດງພະລັງຄວາມສາມັກຄີ. ຂໍໃຫ້ເພີດເພີນກັບສະບັບທຳອິດຂອງປີ 2020. ພວກເຮົາຫວັງວ່າ, ເມື່ອທ່ານໄດ້ອ່ານສະບັບທີສອງໃນເດືອນທັນວາ, ໂລກນີ້ຈະກັບມາສະຫວ່າງສົດໃສອີກຄັ້ງ.

ດ້ວຍຄວາມຮັກແພງ
Johann Heilmann
ຜູ້ອຳນວຍການປະຈຳພາກພື້ນ

# ສປປ ລາວ ຮັບຮອງເອົາດຳລັດການຮຽນຮູ້ຕະຫຼອດຊີວິດ

**ແຕ່ປີ 2015 ແນວຄວາມຄິດການຮຽນຮູ້ຕະຫຼອດຊີວິດ ໄດ້ຖືກນຳສະເໜີຢ່າງເປັນທາງການ ໃນວາລະການດຳເນີນງານຂອງສະຫະປະຊາຊາດ 2030. ປະຈຸບັນນີ້ ສປປ ລາວ ໄດ້ນຳໃຊ້ຂອບພື້ນຖານດັ່ງກ່າວ. ໃນວັນທີ 23 ເດືອນມີນາ 2020, ພະນະທ່ານນາຍົກລັດຖະມົນຕີ ທອງລຸນ ສີສຸລິດ ໄດ້ລົງນາມໃນດຳລັດວ່າດ້ວຍການຮຽນຮູ້ຕະຫຼອດຊີວິດ ເຊິ່ງໄດ້ພັດທະນາໃນປີຜ່ານມາ ໂດຍການສະໜັບສະໜູນຈາກ ດີວີວີ ອິນເຕີເນເຊິນແນວ.**

ດຳລັດນີ້ຈະຊ່ວຍເປີດມຸມມອງກ່ຽວກັບການສຶກສາ ແລະ ແນວຄວາມຄິດເກົ່າໆ ທີ່ຢູ່ບົນພື້ນຖານການຈຳແນກລະຫວ່າງການສຶກສາໃນໂຮງຮຽນ ແລະ ນອກໂຮງຮຽນນັ້ນໃຫ້ກວ້າງຂຶ້ນ. ສຳລັບຄູ ແລະ ຜູ້ກຳນົດນະໂຍບາຍ ນີ້ແມ່ນໂອກາດທີ່ດີໃນການເປີດໂອກາດການຮຽນຮູ້ໃໝ່ ແລະ ຮັບຮູ້ທຸກຮູບແບບຂອງການຮຽນຮູ້; ທັງການສຶກສາໃນໂຮງຮຽນ, ນອກໂຮງຮຽນ ແລະ ການສຶກສາຕາມອັດທະຍາໄສ. ດຳລັດນີ້ ສາມາດນຳໃຊ້ເປັນແນວທາງໃນການທົບທວນຄືນແຜນການ ແລະ ແຜນງານ ແລະ ການພັດທະນານະວັດຕະກຳທາງການສຶກສາທີ່ເປັນປະໂຫຍດແກ່ປະຊາຊົນທົ່ວປະເທດໃນໄລຍະຍາວ.

ຫ້ອງການ ດີວີວີ ອິນເຕີເນເຊິນແນວ ໄດ້ສະໜັບສະໜູນຂະບວນການພັດທະນາດຳລັດດັ່ງກ່າວ, ໂດຍການຮ່ວມມືກັບຄູ່ຮ່ວມພັດທະນາກົມການສຶກສານອກໂຮງຮຽນ, ກະຊວງສຶກສາທິການ ແລະ ກິລາ. ເປັນເວລາຫຼາຍປີທີ່ ດີວີວີ ອິນເຕີ-ເນເຊິນແນວໄດ້ສະໜອງດ້ານວິຊາການ, ການຈັດກອງປະຊຸມຮ່ວມກັບບັນດາຜູ້ຕາງໜ້າຈາກກະຊວງ ທີ່ກ່ຽວຂ້ອງ ແລະ ເຊື່ອມໂຍງກົມການສຶກສານອກໂຮງຮຽນກັບຄູ່ຮ່ວມງານຈາກສາກົນ ເຊັ່ນ: ສູນແຫ່ງການຮຽນຮູ້ຕະຫຼອດຊີວິດຂອງອົງການລັດຖະມົນຕີສຶກສາແຫ່ງອາຊີຕາເວັນອອກສ່ຽງໃຕ້ (SEAMEO CELL), ສະມາຄົມອາຊີປາຊີຟິກເພື່ອການສຶກສາຂັ້ນພື້ນຖານ ແລະ ການສຶກສາຜູ້ໃຫຍ່ (ASPBAE) ແລະ ຫ້ອງການຢູເນສໂກປະຈຳພາກພື້ນ ທີ່ບາງກອກ. ທັງໝົດນັ້ນແມ່ນໄດ້ຮ່ວມກັນພັດທະນາມາພ້ອມກັນຕັ້ງແຕ່ເລີ່ມຕົ້ນ.

ດ້ວຍການລົງນາມຂັ້ນສຸດທ້າຍ, ຂັ້ນຕອນທຳອິດຫຼັງຈາກນີ້ແມ່ນການເລີ່ມຕົ້ນຈັດຕັ້ງປະຕິບັດ,ການປະກາດນຳໃຊ້ດຳລັດແມ່ນເປັນຈຸດສູນກາງຂອງວຽກງານລະດັບມະຫາພາກ, ເຊິ່ງທາງຫ້ອງການດີວີວີອິນເຕີເນເຊິນແນວຈະເລີ່ມສ້າງແຜນງານໃນຊຸມປີຕໍ່ໜ້າ. ບາດກ້າວທຳອິດແມ່ນການສ້າງຕັ້ງຄະນະຊີ້ນຳໃນລະດັບຊາດເພື່ອຈັດຕັ້ງປະຕບັດດຳລັດ. ບາດກ້າວຕໍ່ມາ ແມ່ນການພັດທະນາແຜນງານທີ່ເປັນຮູບປະທຳ ເຊິ່ງຈະຊ່ວຍສ້າງຄວາມເຂັ້ມແຂງໃຫ້ແກ່ວຽກງານການສຶກສາຜູ້ໃຫຍ່ໃນ ສປປ ລາວ. ນອກຈາກນັ້ນ, ເພື່ອເປັນການສືບຕໍ່ຄວາມຮ່ວມມືລະຫວ່າງກົມການສຶກສານອກໂຮງຮຽນ ແລະ ດີວີວີອິນເຕີເນເຊິນແນວ ຍັງໄດ້ຮ່ວມມືກັນກັບຄະນະສຶກສາສາດມະຫາວິທະຍາໄລແຫ່ງຊາດລາວ ໃນການປະສົມປະສານທິວຂໍ້ການຮຽນຮູ້ຕະຫຼອດຊີວິດເຂົ້າໃນການຝຶກອົບຮົມຄູ. ການເປີດໂຕດຳລັດສະບັບນີ້ຢ່າງເປັນທາງການແມ່ນຍັງຕ້ອງໄດ້ວາງແຜນກັນຄືນໃໝ່ ເນື່ອງຈາກວ່າກອງປະຊຸມໄດ້ຖືກເລື່ອນອອກໄປ ຍ້ອນການລະບາດຂອງພະຍາດ ໂຄວິດ-19.








*ທີ່ປຶກສາຂອງພວກເຮົາ ຮັບຜິດຊອບ ກສນ ຂັ້ນເມືອງ ແລະ ການຮຽນຮູ້ ຕະຫຼອດຊີວິດ*

# ການພັດທະນາດຳລັດການຮຽນຮູ້ຕະຫຼອດຊີວິດ ໃນ ສປປ ລາວ

*ອຸ່ນເພັງ ຄຳມັງ, ດີວີວີ ອິນເຕີເນເຊິນແນວ*

## ຂັ້ນຕອນການຮ່າງດຳລັດ

ເພື່ອດຳເນີນຕາມແນວຄວາມຄິດການຮຽນຮູ້ຕະຫຼອດຊີວິດ ໃນເດືອນມີນາ ປີ 2012 ກົມການສຶກສານອກໂຮງຮຽນ (ກສນ) ໄດ້ຈັດປະຊຸມກ່ຽວກັບແນວຄວາມຄິດການຮຽນຮູ້ຕະຫຼອດຊີວິດສຳລັບພະນັກງານໃນກະຊວງ ແລະ ບັນດາພາກສ່ວນທີ່ກ່ຽວຂ້ອງອ້ອມຂ້າງກະຊວງ. ກອງປະຊຸມຄັ້ງນີ້ ມີຈຸດປະສົງເພື່ອໃຫ້ຜູ້ກຳນົດນະໂຍບາຍ ແລະ ພາກສ່ວນກ່ຽວຂ້ອງເກີດຄວາມຮັບຮູ້ແລະເຂົ້າໃຈເຖິງຄວາມສຳຄັນຂອງການຮຽນຮູ້ຕະຫຼອດຊີວິດ. ກອງປະຊຸມຄັ້ງທີສອງໄດ້ຈັດຂຶ້ນໃນເດືອນມີນາ ປີ 2013 ໂດຍມີຈຸດປະສົງເພື່ອໃຫ້ຜູ້ຕາງໜ້າຈາກກະຊວງສຶກສາທິການ ແລະ ກິລາ ແລະ ບັນດາພະແນກສຶກສາທິການ ແລະ ກິລາ ໃນຂັ້ນແຂວງ ໄດ້ສົນທະນາກ່ຽວກັບວິທີການສ້າງຮ່າງນະໂຍບາຍການຮຽນຮູ້ຕະຫຼອດຊີວິດແຫ່ງຊາດ ໂດຍອີງຕາມຄຳແນະນຳທີ່ໄດ້ຈາກບັນດາຜູ້ເຂົ້າຮ່ວມຈາກກອງປະຊຸມຄັ້ງທີສອງ, ກົມການສຶກສານອກໂຮງຮຽນ ໄດ້ຮ່າງດຳລັດການຮຽນຮູ້ຕະຫຼອດຊີວິດຂອງ ສປປ ລາວ ແລະ ໄດ້ມີບັນດາພາກສ່ວນກ່ຽວຂ້ອງໃນການແກ້ໄຂປັບປຸງໃໝ່. ກົມການສຶກສານອກໂຮງຮຽນໄດ້ລິເລີ່ມໂຄງການໃນການກຳນົດນະໂຍບາຍ ໂດຍການສະໜັບສະໜູນຈາກຫ້ອງການ ດີວີວີ ອິນເຕີເນເຊິນແນວ (DVV International) ແລະ ອົງການຢູເນສໂກ. ໃນການສ້າງນະໂຍບາຍແມ່ນໄດ້ເຊີນຊ່ຽວຊານຈາກພາຍນອກເພື່ອມາພັດທະນາ ເຊິ່ງໄດ້ແບ່ງອອກເປັນສອງຂັ້ນຕອນຄື: ຂັ້ນຕອນທຳອິດ ໄດ້ມີການຄົ້ນຄວ້າເອກະສານ ນິຕິກຳຕ່າງໆ ໃນ ສປປ ລາວ ລວມທັງການຄົ້ນຄວ້າກ່ຽວກັບການພັດທະນານະໂຍບາຍການຮຽນຮູ້ຕະຫຼອດຊີວິດໃນບັນດາປະເທດເພື່ອນບ້ານ ແລະ ການໃຫ້ຄຳປຶກສາແກ່ກົມການສຶກສານອກໂຮງຮຽນໃນໄລຍະ 3 ເດືອນ. ກິດຈະກຳໃນການກະກຽມນະໂຍບາຍໄດ້ລວມທັງການຄົ້ນຄວ້າ ແລະ ວິເຄາະບັນດາເອກະສານນິຕິກຳຕ່າງໆ ທີ່ກ່ຽວຂ້ອງ ແລະ ບັນດານະໂຍບາຍໃນບໍລິບົດຂອງລະດັບພາກພື້ນ ແລະ ສາກົນ. ການຄົ້ນຄວ້າໄດ້ດຳເນີນການເກັບກ່ຽວແນວຄວາມຄິດລິເລີ່ມການຮຽນຮູ້ຕະຫຼອດຊີວິດຂອງປະເທດໃນພາກພື້ນອາຊີ ເຊັ່ນ: ຍີ່ປຸ່ນ, ເກົາຫຼີ, ອິນໂດເນເຊຍ, ມາເລເຊຍ, ຟີລິບປິນ, ໄທ ແລະ ຫວຽດນາມ. ຄົ້ນຄວ້າບັນດາເອກະສານເພື່ອການພັດທະນາແບບຍືນຍົງ, ການສຶກສາເພື່ອຄວາມເປັນພົນລະເມືອງໂລກ, ປະຊາຄົມເສດຖະກິດອາຊຽນ ແລະ ເອກະສານອື່ນໆ ເພື່ອຊ່ວຍໃຫ້ເຂົ້າໃຈກ່ຽວກັບການພັດທະນາວຽກງານການຮຽນຮູ້ຕະຫຼອດຊີວິດໃນບໍລິບົດຂອງສາກົນ. ຂັ້ນຕອນທີສອງແມ່ນການສຳພາດ ແລະ ການສົນທະນາໃນລະດັບຂອງຜູ້ກຳນົດນະໂຍບາຍ ແລະ ພາກສ່ວນກ່ຽວຂ້ອງຈາກສາກົນ, ການຮ່ວມມືລາວເຢຍລະມັນ ແລະ ຄູ່ຮ່ວມພັດທະນາ ອື່ນໆ. ທ່າແຮງຂອງຂະແໜງການສຶກສາໃນ ສປປ ລາວ ລວມທັງຂໍ້ມູນດ້ານປະຊາກອນກໍໄດ້ຮັບການພິຈາລະນາ ແລະ ນຳໃຊ້ໃນການກະກຽມນະໂຍບາຍ. ອີງຕາມຜົນຂອງການວິໄຈ ຮ່າງນະໂຍບາຍສະບັບທຳອິດຖືກນຳສະເໜີໃນກອງປະຊຸມ ເຊິ່ງໃນກອງປະຊຸມແມ່ນໄດ້ມີບັນດາຜູ້ຕາງໜ້າຂອງກະຊວງສຶກສາ ແລະ ກິລາ ໄດ້ໃຫ້ຄຳເຫັນກ່ຽວກັບເນື້ອໃນຂອງຮ່າງນະໂຍບາຍ. ຕໍ່ມາກໍໄດ້ມີກອງປະຊຸມວິຊາການມີຈຸດປະສົງເພື່ອກວດສອບຄວາມຄວາມຖືກຕ້ອງທາງດ້ານເນື້ອໃນວິຊາການ ເຊັ່ນ: ການອອກແບບເນື້ອໃນ, ໂຄງຮ່າງ, ຮູບແບບ ແລະ ຄຸນລັກສະນະທາງດ້ານວິຊາການຂອງນະໂຍ-ບາຍ. ກົມການສຶກສານອກໂຮງຮຽນໄດ້ປັບປຸງສະບັບຮ່າງ ແລະ ແລກປ່ຽນ ໃນກອງປະຊຸມຕ່າງໆ ກັບບັນດາຜູ້ຕາງໜ້າຈາກພະແນກສຶກສາທິການ ແລະ ກິລາຂັ້ນແຂວງ, ຂັ້ນກະຊວງ ລວມທັງພາກສ່ວນກ່ຽວຂ້ອງ. ຂະບວນການທັງໝົດນີ້ແມ່ນສືບຕໍ່ແຕ່ກາງປີ 2016 ເຖິງກາງປີ 2019.

ການພັດທະນາດຳລັດການຮຽນຮູ້ຕະຫຼອດຊີວິດໄດ້ລິເລີ່ມສົນທະນາຫຼາຍຄັ້ງໃນກອງປະຊຸມພາຍໃນຂອງຂະແໜງການສຶກສາ ແລະ ກອງປະຊຸມລະດັບສູງ. ຮ່າງດຳລັດສະບັບສຸດ-ທ້າຍແມ່ນປະກອບດ້ວຍການປະເມີນຜົນຂອງດຳລັດ ເຊິ່ງໄດ້ຖືກນຳສະເໜີໃຫ້ເປັນເຄື່ອງມືໃນການພັດທະນາກົດໝາຍ ແລະ ດຳລັດຕ່າງໆ ໂດຍກະຊວງຍຸດຕິທຳ. ໃນກອງປະຊຸມຄັ້ງສຸດທ້າຍ ທີ່ຈັດຂຶ້ນໃນຕົ້ນປີ 2019 ດຳລັດການຮຽນຮູ້ຕະຫຼອດຊີວິດສະບັບສົມບູນ ແລະ ໄດ້ຖືກຍື່ນເຖິງກະຊວງທີ່ກ່ຽວຂ້ອງ ລວມທັງຫ້ອງການສຳນັກງານນາຍົກລັດຖະມົນຕີເພື່ອຈະໄດ້ນຳສະເໜີແລະຂໍອະນຸມັດໃນກອງປະຊຸມປະຈຳເດືອນຂອງລັດຖະບານ ໃນເດືອນມິຖຸນາ ປີ 2019.

ການພັດທະນານະໂຍບາຍການຮຽນຮູ້ຕະຫຼອດຊີວິດໄດ້ຮັບການສະໜັບສະໜູນທາງດ້ານວິຊາການ ແລະ ງົບປະມານຈາກຫ້ອງການ ດີວີວີ ອິນເຕີເນເຊິນແນວ ປະຈຳພາກພື້ນ ເຊິ່ງໄດ້ເຮັດວຽກຢ່າໃກ້ຊິດກັບກົມການສຶກສານອກໂຮງຮຽນກະຊວງສຶກສາທິການ ແລະ ກິລາ. ເຊິ່ງໄດ້ຮ່ວມກັນຈັດກິດຈະກຳຕ່າງໆທີ່ມີຄວາມໝາຍຫຼາຍຢ່າງເຊັ່ນ: ທັດສະນະສຶກສາ, ຝຶກອົບຮົມສ້າງຂີດຄວາມອາດສາມາດ, ກອງປະຊຸມວິຊາການ ແລະ ກອງປະຊຸມຕ່າງໆ ທັງພາຍໃນ ແລະ ຕ່າງປະເທດ. ນອກນັ້ນ, ຍັງໄດ້ຮັບການສະໜັບສະໜູນຈາກອົງການ ຢູເນສໂກ ຫ້ອງການປະຈຳພາກພື້ນທີ່ບາງກອກ ໂດຍການຮ່ວມສະໜັບສະໜູນທີ່ປຶກສາໃນການພັດທະນາດຳລັດ ແລະ ສະຖາບັນເພື່ອການຮຽນຮູ້ຕະຫຼອດຊີວິດຂອງຢູເນສໂກ



ໄດ້ໃຫ້ທຶນພະນັກງານວິຊາການສອງທ່ານໃນການຄົ້ນຄວ້າກ່ຽວກັບການຮຽນຮູ້ຕະຫຼອດຊີວິດ.

ຄຽງຄູ່ກັບການພັດທະນາດຳລັດ, ຄະນະສຶກສາສາດ, ມະຫາວິທະຍາໄລແຫ່ງຊາດລາວ ແລະ ດີວີວີ ອິນເຕີເນຊັນແນວ ໄດ້ຮ່ວມກັນພັດທະນາ ແລະ ທົດລອງສອນວິຊາການຮຽນຮູ້ຕະຫຼອດຊີວິດ ເຊິ່ງວິຊາການຮຽນຮູ້ຕະຫຼອດຊີວິດໄດ້ສອນໃຫ້ແກ່ນັກຮຽນຊັ້ນປີທີ 1 ໃນພາກຮຽນທຳອິດຂອງສົກຮຽນ 2017-2018 ແລະ ໄດ້ແຜ່ຂະຫຍາຍໄປເຖິງມະຫາວິທະຍາໄລສະຫວັນນະເຂດ ທີ່ຕັ້ງຢູ່ທາງພາກກາງ ແລະ ມະຫາວິທະຍາໄລສຸພານຸວົງ ທີ່ຕັ້ງຢູ່ທາງພາກເໜືອຂອງປະເທດ. ຄະນະສຶກສາສາດ, ມະຫາວິະຍາໄລແຫ່ງຊາດລາວໄດ້ຈັດກອງປະຊຸມວິຊາການເພື່ອເປັນການແລກປ່ຽນ ແລະ ແບ່ງປັນປະສົບການກ່ຽວກັບການທົດລອງສອນວິຊາການຮຽນຮູ້ຕະຫຼອດຊີວິດຂອງມະຫາວິທະຍາໄລທັງສາມແຫ່ງ. ຄວາມຮ່ວມມືນີ້ແມ່ນເປັນໂອກາດອັນດີໃນການສົ່ງເສີມການຮຽນຮູ້ຕະຫຼອດຊີວິດ ເນື່ອງຈາກວ່າບັນດາຄູສອນ ແລະ ຄູຝຶກເກືອບທັງໝົດແມ່ນເປັນຄູສອນຢູ່ແລ້ວ. ນອກຈາກນີ້, ແນວຄວາມຄິດໂດຍລວມຂອງການຮຽນຮູ້ຕະຫຼອດຊີວິດແມ່ນຮຽກຮ້ອງໃຫ້ມີການຈັດຕັ້ງປະຕິບັດເລີ່ມຕັ້ງແຕ່ການສຶກສາຂັ້ນທຳອິດ ເພື່ອເປັນການສ້າງແຜນພາບທີ່ດີຂອງການຮຽນຮູ້ ແລະ ເຮັດໃຫ້ຄົນຮຸ່ນຕໍ່ໄປສາມາດຮຽນຮູ້ດ້ວຍຕົນເອງ. ດຳລັດການຮຽນຮູ້ຕະຫຼອດຊີວິດຈະເປີດປະຕູ ເພື່ອຂະຫຍາຍຄວາມຕັ້ງໃຈເຫຼົ່ານີ້ໄປສູ່ບັນດາວິທະຍາໄລຄູ ເຊິ່ງເປັນສະຖານທີ່ຝຶກອົບຮົມຄູຊັ້ນປະຖົມ. ໃນປະຈຸບັນວິທະຍາໄລຄູແມ່ນຂຶ້ນກັບຂະແໜງການອື່ນຂອງກະຊວງສຶກສາ ເຊິ່ງເປັນຂໍ້ຫຍຸ້ງຍາກໃນການຮ່ວມມື.

ດຳລັດການຮຽນຮູ້ຕະຫຼອດຊີວິດເປັນຕົວແທນ ຂອງການພັດທະນານະໂຍບາຍຄັ້ງປະຫວັດສາດຂອງ ສປປ ລາວ. ມັນເປັນເອກະສານສະບັບທຳອິດຂອງປະເທດ ລັດຖະບານເຫັນດີວ່າມັນເປັນນະໂຍບາຍທີ່ກວ້າງຂວາງຄອບຄຸມທຸກຂະແໜງການ ແລະ ພາກສ່ວນທີ່ກ່ຽວຂ້ອງ. ກະຊວງສຶກສາທິການ ແລະ ກິລາ ໄດ້ຖືກມອບໝາຍຈາກລັດຖະບານໃຫ້ມີບົດບາດສຳຄັນໃນການພັດທະນາ ແລະ ດຳເນີນການຈັດຕັ້ງປະຕິບັດດຳລັດການຮຽນຮູ້ຕະຫຼອດຊີວິດ. ກະຊວງສຶກສາທິການ ແລະ ກິລາ ໄດ້ນະເໜີຊື່ຄະນະກຳມາທິການ ເຊິ່ງປະກອບດ້ວຍຮອງລັດຖະມົນຕີເປັນປະທານ, ຫົວໜ້າກົມ ແລະ ຮອງກົມການສຶກສານອກໂຮງຮຽນ, ຮອງກົມແຜນການ, ຮອງກົມຈັດຕັ້ງ ແລະ ພະນັກງານ ແລະ ບັນດາກົມອື່ນໆທີ່ກ່ຽວຂ້ອງ. ກົມການສຶກສານອກໂຮງຮຽນມີບົດບາດເປັນໜ່ວຍງານຫຼັກໃນຂະບວນການພັດທະນາດຳລັດ. ຄ່າໃຊ້ຈ່າຍໃນການບໍລິຫານ, ສສກ ແມ່ນເປັນຫຼັກໃນການສະໜອງຂໍ້ມູນ ແລະ ວິຊາການ. ໃນລະຫວ່າງຂະບວນການພັດທະນາໄດ້ມີການຈັດກອງປະຊຸມຫຼາຍຄັ້ງທັງໃນດ້ານວິຊາການ ແລະ ໃນລະດັບສູງ ເຊິ່ງໃນນັ້ນມີອົງການຕ່າງໆ ແລະ ພາກສ່ວນກ່ຽວຂ້ອງຕ່າງໆ ເຂົ້າຮ່ວມເພື່ອແບ່ງປັນແນວຄວາມຄິດ ແລະ ທັດສະນະຂອງພວກເຂົາ.

## ຂັ້ນຕອນການພັດທະນານະໂຍບາຍການຮຽນຮູ້ຕະຫຼອດຊີວິດ

**ຂັ້ນຕອນທີ 1: ທີ່ປຶກສາຈາກພາຍນອກໄດ້ດຳເນີນ ການ ສຳຫຼວດ ເບື້ອງຕົ້ນ ແລະ ພັດທະນາຮ່າງດຳລັດສະບັບທຳອິດ ໃນເດືອນເມສາ ປີ 2016.**

**ຂັ້ນຕອນທີ 2: ການປັບປຸງນະໂຍບາຍການຮຽນຮູ້ຕະຫຼອດ ຊີວິດ, ສະຫຼຸບ ແລະ ສົ່ງໃຫ້ຫ້ອງວ່າການລັດຖະບານເພື່ອຂໍອະນຸມັດ.**

ຂັ້ນຕອນການພັດທະນານະໂຍບາຍການຮຽນຮູ້ຕະຫຼອດຊີວິດ ຂັ້ນຕອນທີ 1: ທີ່ປຶກສາຈາກພາຍນອກໄດ້ດຳເນີນການສຳຫຼວດເບື້ອງຕົ້ນ ແລະ ພັດທະນາຮ່າງດຳລັດສະບັບທຳອິດ ໃນເດືອນເມສາ ປີ 2016.

- ທີ່ປຶກສາຈາກພາຍນອກຈາກຟີລິບປິນໄດ້ດຳເນີນການສຳຫຼວດ ແລະ ຮ່າງນະໂຍບາຍສະບັບທຳອິດ. ເພິ່ນໄດ້ປະຈຳການຢູ່ທີ່ກົມການສຶກສານອກໂຮງຮຽນ ແລະ ເຮັດວຽກຢ່າງໃກ້ຊິດກັບຮອງຫົວໜ້າກົມການສຶກສານອກໂຮງຮຽນໃນຖານະຜູ້ປະສານງານຫຼັກ.
- ຮ່າງນະໂຍບາຍໄດ້ຮັບຄຳເຫັນຈາກຜູ້ເຂົ້າຮ່ວມໃນກອງປະຊຸມວິຊາການ ແລະ ກອງປະຊຸມລະດັບສູງຫຼາຍຄັ້ງ.
- ຫຼັງຈາກນັ້ນ, ຮ່າງດຳລັດສະບັບທຳອິດໄດ້ຖືກແປເປັນພາສາອັງກິດ ແລະ ຖືກນຳສະເໜີໃນກອງປະຊຸມລະດັບສູງຂອງກະຊວງສຶກສາທິການ ແລະ ກິລາ. ໂດຍອີງຕາມຄຳຄິດເຫັນຈາກກອງປະຊຸມໄດ້ມີການປັບປຸງໃໝ່ ໂດຍສະເພາະການມີສ່ວນຮ່ວມ ແລະ ການແບ່ງຄວາມຮັບຜິດຊອບຂອງພາກສ່ວນກ່ຽວຂ້ອງ ເຊິ່ງບໍ່ພຽງແຕ່ຂະແໜງການສຶກສາ. ໂຄງປະກອບຂອງຄະນະກຳມາທິການໄດ້ຖືກປັບໂຄງຮ່າງຄືນໃໝ່; ມັນກາຍເປັນສ່ວນສຳຄັນຂອງຄະນະກຳມາທິການຊັບພະຍາກອນມະນຸດ ເພື່ອເປັນການຫຼີກລ່ຽງການເຮັດວຽກຊ້ຳຊ້ອນ ແລະ ສ້າງໂຄງສ້າງອື່ນໆ.

ຂັ້ນຕອນທີ 2: ການປັບປຸງນະໂຍບາຍການຮຽນຮູ້ຕະຫຼອດຊີວິດ, ການສະຫຼຸບ ແລະ ສົ່ງໃຫ້ຫ້ອງວ່າການລັດຖະບານເພື່ອຂໍອະນຸມັດ.

- ດ້ວຍການສະໜັບສະໜູນຂອງອົງການຢູເນສໂກ ແລະ ຫ້ອງການ ດີວີວີ ອິນເຕີນເຊິນແນວ, ກສນ ໄດ້ຮ່ວມມືກັບພາກສ່ວນກ່ຽວຂ້ອງ ແລະ ຄູ່ຮ່ວມພັດທະນາອື່ນໆ ໃນການຈັດກອງະຊຸມວິຊາການ ແລະ ກອງປະຊຸມລະດັບສູງ ເພື່ອສືບຕໍ່ດຳເນີນການ ແລະ ສະຫຼຸບເນື້ອໃນສຸດທ້າຍຂອງດຳລັດການຮຽນຮູ້ຕະຫຼອດຊີວິດ. ກອງປະຊຸມວິຊາການ ແລະ ກອງປະຊຸມລະດັບສູງໄດ້ມີຜູ້ເຂົ້າຮ່ວມຈາກພາກສ່ວນທີ່ກ່ຽວຂ້ອງໂດຍກົງໃນການພັດທະນາຂອບນິຕິກຳ ແລະ ກົດໝາຍພາຍໃນປະເທດ ເຊັ່ນ: ກະຊວງຍຸດຕິທຳ.
- ໃນທີ່ສຸດ, ຕົ້ນເດືອນພຶດສະພາ ປີ 2019 ກົມການສຶກສານອກໂຮງຮຽນໄດ້ສະເໜີບົດລາຍງານກ່ຽວກັບການພັດທະນາດຳລັດວ່າດ້ວຍການຮຽນຮູ້ຕະຫຼອດຊີວິດ ເຖິງລັດຖະມົນຕີກະຊວງສຶກາທິການ ແລະ ກິລາ. ທ່ານລັດຖະມົນຕີກະຊວງສຶກສາທິການ ແລະ ກິລາໄດ້ສົ່ງໜັງສືສະເໜີໄປຍັງສຳນັກງານນາຍົກລັດຖະມົນຕີ ແລະ ກະຊວງຍຸດຕິທຳເພື່ອດຳເນີນການໃນຂັ້ນຕໍ່ໄປ. ກະຊວງຍຸດຕິທຳ ຮ່ວມກັບກະຊວງສຶກສາທິການ ແລະ ກິລາ ແລະ ບັນດາພາກສ່ວນທີ່ກ່ຽວຂ້ອງໄດ້ດຳເນີນການທົບທວນດຳລັດໂດຍອີງຕາມຫຼັກການກົດໝາຍ. ຫຼັງຈາກນັ້ນ ນະໂຍບາຍການຮຽນຮູ້ຕະຫຼອດຊີວິດໄດ້ຖືກຮັບຮອງຢ່າງເປັນທາງການ ໜັງສືຮັບຮອງໄດ້ຖືກສົ່ງໄປຍັງກະຊວງສຶກສາທິການ ແລະ ກິລາ ແລະ ສຳນັກງານນາຍົກລັດຖະມົນຕີ.

ຫ້ອງວ່າການສຳນັກງານນາຍົກລັດຖະມົນຕີໄດ້ສົ່ງຕໍ່ໃຫ້ສະມາຊິກລັດຖະບານເພື່ອຂໍຄຳເຫັນ ແລະ ຂໍ້ສະເໜີແນະ. ພາຍຫຼັງໄດ້ຮັບຂໍ້ສະເໜີແນະແລ້ວ ສຳນັກງານນາຍົກລັດຖະມົນຕີ ສົ່ງຕໍ່ໄປເຖິງກະຊວງສຶກສາທິການ ແລະ ກິລາ ເພື່ອສະຫຼຸບຄືນ ແລະ ແກ້ໄຂໂດຍອີງຕາມຄຳເຫັນດັ່ງກ່າວ ແລະ ໄດ້ສົ່ງດຳລັດສະບັບສົມບູນໄປເຖິງສຳນັກງານນາຍົກລັດຖະມົນຕີ. ສຳນັກງານນາຍົກລັດຖະມົນຕີໄດ້ສົ່ງຕໍ່ໄປເຖິງນາຍົກລັດຖະມົນຕີ ເພື່ອຂໍອະນຸມັດ ແລະ ລົງນາມ. ແລະ ທ້າຍທີ່ສຸດ ດຳລັດການຮຽນຮູ້ຕະຫຼອດຊີວິດໄດ້ຖືກຮັບຮອງ ແລະ ລົງນາມໂດຍ ທ່ານນາຍົກລັດຖະມົນຕີໃນວັນທີ 23 ເດືອນມີນາ 2020.

ພາຍຫຼັງໄດ້ຮັບການຮັບຮອງຢ່າງເປັນທາງການ, ກະຊວງສຶກສາທິການ ແລະ ກິລາ ຈະສືບຕໍ່ດຳເນີນເປີດໂຕ ແລະ ຈັດຕັ້ງປະຕິບັດກິດຈະກຳ. ເນື່ອງຈາກວ່າດຳລັດການຮຽນຮູ້ຕະຫຼອດຊີວິດແມ່ນຂໍ້ຕົກລົງສະບັບທຳອິດຂອງ ສປປ ລາວ, ມັນຍັງມີຄວາມຕ້ອງການ ການມີສ່ວນຮ່ວມ ແລະ ສະໜັບສະໜູນຈາກບັນດາພາກສ່ວນກ່ຽວຂ້ອງ ແລະ ຄູ່ຮ່ວມພັດທະນາທັງທາງດ້ານວິຊາການ ແລະ ງົບປະມານ.



# 10 ຄຸນລັກສະນະຂອງການເປັນຜູ້ຮຽນຮູ້ຕະຫຼອດຊີວິດ

### ຮູ້ຈັກສິ່ງທີ່ຕົນເອງສົນໃຈ

ຖ້າທ່ານຕ້ອງການຢາກຮຽນຮູ້ສິ່ງໃໝ່, ທ່ານສົນໃຈຢາກຮຽນຫຍັງຫຼາຍທີ່ສຸດ? ທັກສະໃໝ່ນີ້ແມ່ນສຳລັບເປັນອາຊີບ ຫຼື ເຫດຜົນສ່ວນຕົວ ຫຼື ທັງສອງຢ່າງ? ເຖິງແມ່ນວ່າມັນຈະບໍ່ສາມາດນຳໄປໃຊ້ກັບວຽກງານໂດຍກົງ, ການທີ່ເຮົາສົນໃຈສິ່ງໃໝ່ໆ ຈະຊ່ວຍໃຫ້ເຮົາມີຄວາມກະຕືລືລົ້ນຫຼາຍຂຶ້ນ, ມີຄວາມເປັນມືອາຊີບຮອບດ້ານ.

### ຮູ້ຈັກຮູບແບບການຮຽນຂອງຕົນເອງ

ທຸກໆ ຄົນມີວິທີການຂອງໂຕເອງໃນການຮຽນຮູ້ສິ່ງໃໝ່, ຕົວຢ່າງ: ອາດຈະຮຽນຮູ້ໄດ້ດີທີ່ສຸດດ້ວຍການອ່ານ, ການຂຽນ, ການຟັງ, ຫຼື ໂດຍການລົງມືປະຕິບັດ? ເລືອກແຫຼ່ງການຮຽນຮູ້ຕະຫຼອດຊີວິດທີ່ຕອບສະໜອງຮູບແບບການຮຽນຮູ ແລະ ຄວາມມັກຂອງໂຕເອງ.

### ຕັ້ງເປົ້າໝາຍ

ມຸ່ງໝັ້ນໃນການຮຽນຮູ້ໂດຍກຳນົດເປົ້າໝາຍທີ່ຊັດເຈນສຳລັບສິ່ງທີ່ຕ້ອງການຢາກຮຽນ, ວາງແຜນສິ່ງທີ່ຈະຮຽນ ແລະ ຈະໃຊ້ເວລາເທົ່າໃດ. ແລະ ຢ່າລືມໃຫ້ລາງວັນໂຕເອງທີ່ເຮັດໄດ້ສຳເລັດ.

### ພັດທະນານິໄສການອ່ານທີ່ດີ

ຄັ້ງສຸດທ້າຍທີ່ອ່ານ ຫຼື ຟັງໜັງສືດີໆ ແມ່ນຕອນໃດ? ນິໄສການອ່ານທີ່ດີຈະຊ່ວຍເປີດໂລກທັດການພະຈົນໄພ ແລະ ການສຳຫຼວດວັດທະນະທຳ ແລະ ປະສົບການອ້ອມໂລກ.

### ສະແຫວງຫາແຫຼ່ງຂໍ້ມູນ

ຄົ້ນຫາຂໍ້ມູນກ່ຽວກັບໂອກາດໃນການຮຽນຮູ້ອອນໄລໃນຫ້ອງສະໝຸດ ຫຼື ໃນໂຮງຮຽນ ແລະ ມະຫາວິທະຍາໄລ ໃກ້ບ້ານທ່ານ. ມີຫຼາຍແຫ່ງສະໜອງໂອກາດການສຶກສາຕໍ່ເນື່ອງທີ່ມ່ວນ ແລະ ໄດ້ຄວາມຮູ້.

### ເຂົ້າຮ່ວມກຸ່ມທີ່ມັກການຮຽນຮູ້

ທ່ານເຄີຍໄດ້ຍິນກ່ຽວກັບ ເວັບໄຊ www.meetup.com ບໍ່? ມັນເປັນສະຖານທີ່ທີ່ຈະຂຽນຄຳອະທິບາຍກ່ຽວກັບຕົວທ່ານເອງ ແລະ ຊອກຫາຄົນທີ່ມີປະສົບການຄືກັນ.

### ມີສ່ວນຮ່ວມ

ເປັນອາສາສະໝັກໃນໂບດ, ໃນວັດ ຫຼື ໃນຊຸມຊົນ ຊ່ວຍໃຫ້ເຮົາໄດ້ພົບປະຄົນອື່ນ, ຮຽນຮູ້ກ່ຽວກັບໂອກາດຕ່າງໆ ແລະ ການໃຫ້ໃນສິ່ງທີ່ຜູ້ອື່ນຕ້ອງການ.

### ແບ່ງປັນທັກສະ ແລະ ຄວາມຮູ້ຂອງທ່ານ

ທ່ານຖັກຜ້າແລັ່ນເປັນບໍ່ ຫຼື ແຕ່ງກິນ ຫຼື ມ່ວນຊື່ນກັບການເຮັດເຄື່ອງປັ້ນດິນເຜົາ ຫຼື ດົນຕີ? ເປັນຫຍັງຄືບໍ່ແບ່ງປັນຄວາມຊຳນິຊຳນານນີ້ໃຫ້ຄົນອື່ນ? ໂດຍການສື່ສານແນວຄວາມຄິດຂອງທ່ານກັບຄົນອື່ນ, ທ່ານມີແນວໂນ້ມຈະເສີມສ້າງຄວາມຮູ້ເຫຼົ່ານັ້ນໄດ້ຫຼາຍຂຶ້ນ.

### ເຂົ້າຮຽນ

ຮຽນຫຼັກສູດອອນໄລ ຫຼື ເຂົ້າຮ່ວມຫຼັກສູດໃດໜຶ່ງໃນວິທະຍາໄລ/ມະຫາວິທະຍາໄລ. ຖ້າທ່ານບໍ່ມີເວລາ ໃຫ້ຊອກຫາງານສຳມະນາ ຫຼື ຫຼັກສູດໃດໜຶ່ງທີ່ ທີ່ໃຊ້ເວລາ 4-6 ອາທິດໃນຂອບເຂດພື້ນທີ່ຂອງທ່ານໃຫ້ເໝາະສົມກັບງົບປະມານ ແລະ ຕາຕະລາງເວລາຂອງທ່ານ.

### ມີຄວາມຢາກຮູ້ຢາກເຫັນ

ການຮຽນຮູ້ຕະຫຼອດຊີວິດແມ່ນກ່ຽວກັບການຢູ່ຢ່າງຫ້າວຫັນ ແລະ ຈິດໃຈ, ຮ່າງກາຍ ແລະ ວິນຍານມີຄວາມຢາກຮູ້ຢາກເຫັນ.
ເລືອກເອົາ 1 ໃນ 10 ແນວຄວາມຄິດເຫຼົ່ານີ້ ແລະ ເລີ່ມຕົ້ນມື້ນີ້.

*Source: www.utmb.edu*

# ການຕອບໂຕ້ຕໍ່ວິກິດການ - ພາລະບົດບາດຂອງການຮຽນຮູ້ ແລະ ການສຶກສາຜູ້ໃຫຍ່ໃນການຮັບມືກັບການລະບາດຂອງໂຄໂຣນາ

ສັງຄົມທົ່ວໂລກໄດ້ຮັບຜົນກະທົບຢ່າງໜັກໜ່ວງຈາກການລະບາດຂອງໂຄວິດ-19. ປະຊາຊົນໄດ້ຮັບຜົນກະທົບໃນການດໍາລົງຊີວິດປະຈໍາວັນ ແລະ ມີຄວາມກັງວົນກ່ຽວກັບຜົນກະທົບຕໍ່ກັບສຸຂະພາບ, ວຽກງານ ແລະ ຄວາມເປັນຢູ່. ໃນເກືອບທຸກປະເທດທົ່ວໂລກຜູ້ໃຫ້ບໍລິການດ້ານການສຶກສາສໍາລັບຊາວໜຸ່ມ ແລະ ຜູ້ໃຫຍ່ ຖືກບັງຄັບໃຫ້ປິດຊົ່ວຄາວ ເຊິ່ງມັນມີຜົນກະທົບຢ່າງຫຼວງຫຼາຍຕໍ່ກັບຄວາມຍືນຍົງຂອງສະຖາບັນ, ພະນັກງານຂອງພວກເຂົາ ແລະ ລວມທັງຜູ້ຮຽນ. ໃນຂະນະດຽວກັນ ການຮຽນຮູ້ ແລະ ການສຶກສາຜູ້ໃຫຍ່ (ALE) ສາມາດຊ່ວຍບັນເທົາຜົນກະທົບຈາກວິກິດການນີ້ໄດ້ ໂດຍການໃຫ້ການສຶກສາ, ການຝຶກອົບຮົມ ແລະ ການສະໜັບສະໜູນທາງສັງຄົມ.

ດີວີວີ ອິນເຕີເນເຊິນແນວ ໃນຖານະຄູ່ຮ່ວມພັດທະນາທີ່ສຸມໃສ່ວຽກງານ ການຮຽນຮູ້ ແລະ ການສຶກສາຜູ້ໃຫຍ່, ສະເໜີແນວຄວາມຄິດກ່ຽວກັບວິທີການທີ່ການຮຽນຮູ້ ແລະ ການສຶກສາຜູ້ໃຫຍ່ທີ່ສາມາດມີສ່ວນຮ່ວມໃນການຈັດການກັບວິກິດການນີ້ດ້ວຍການນໍາສະເໜີການບໍລິການທາງສັງຄົມ ແລະ ການສຶກສາໂດຍສະເພາະໃນກຸ່ມທີ່ມີຄວາມສ່ຽງ. ໃນຂະນະດຽວກັນ, ພວກເຮົາຮຽກຮ້ອງໃຫ້ລັດຖະບານ ແລະ ຜູ້ປະຕິບັດງານໃນລະດັບສາກົນຈັດຫາຜູ້ໃຫ້ບໍລິການການຮຽນຮູ້ ແລະ ການສຶກສາຜູ້ໃຫຍ່ - ທັງພາກລັດ, ເອກະຊົນ ແລະ ພາກປະຊາສັງຄົມ ລວມທັງບັນດາບຸກຄະລາກອນທີ່ມີຄວາມພ້ອມໃນການຈັດການກັບສະຖານະການນີ້. ມັນແມ່ນຄວາມຮັບຜິດຊອບຂອງທຸກໆ ພາກສ່ວນ ເພື່ອຮັບປະກັນວ່າຂໍ້ສະເໜີຂອງວຽກງານການສຶກສານອກໂຮງຮຽນຈະຍັງສືບຕໍ່ໃນລະຫວ່າງ ແລະ ຫຼັງວິກິດການນີ້.

## ນໍາໃຊ້ທ່າແຮງຂອງການຮຽນຮູ້ ແລະ ການສຶກສາຜູ້ໃຫຍ່ເພື່ອຕໍ່ຕ້ານ ກັບວິກິດການ

ການຮຽນຮູ້ ແລະ ການສຶກສາຜູ້ໃຫຍ່ແມ່ນຂະແໜງການຍ່ອຍຂອງລະບົບການສຶກສາທີ່ມີການປະສົມປະສານຂອງຄຸນລັກສະນະພິເສດທີ່



ມີຄຸນຄ່າສະເພາະໃນສະຖານະການທີ່ຕໍ່ເນື່ອງ. ການຮຽນຮູ້ ແລະ ການສຶກສາຜູ້ໃຫຍ່ຂັບເຄື່ອນໄປຕາມຄວາມຕ້ອງການ, ປ່ຽນແປງໄດ້, ສ່ວນຫຼາຍແມ່ນບໍ່ເປັນທາງການ, ມີຄວາມຮັດກຸມ ແລະ ທັນປ່ຽນໄດ້. ອີງຕາມສິ່ງທີ່ກ່າວມານີ້, ບັນດາຜູ້ໃຫ້ບໍລິການ ແລ ໂຄງການແມ່ນມີທ່າແຮງສະໜັບສະໜູນປະຊາຊົນໃນຫຼາຍທາງ:

- ດໍາເນີນການໃຫ້ຄວາມຮູ້ກ່ຽວກັບສຸຂະພາບຂັ້ນຕົ້ນ ເຊັ່ນ: ການໂຄສະນາປຸກລະດົມໂດຍສະເພາະໃນກຸມດ້ອຍໂອກາດກ່ຽວກັບເຊື້ອພະຍາດ ແລະ ນໍາໃຊ້ວິທີທີ່ງ່າຍເພື່ອປ້ອງກັນບຸກຄົນ, ຄອບຄົວ ແລະ ຊຸມຊົນ.
- ຈັດກິດຈະກໍາສ້າງລາຍໄດ້ທີ່ມີເປັນສ່ວນປະກອບໃນການຜະລິດອຸປະກອນທີ່ຈໍາເປັນໃນການຜະລິດເຄື່ອງປ້ອງກັນເຊັ່ນ: ຜ້າອັດປາກ (ໜ້າກາກອະນາໄມ), ສະບູ ແລະ ໂພຊະນາການ.
- ພັດທະນາ ແລະ ໃຫ້ໂອກາດໄດ້ຮຽນຮູ້ ເພື່ອຊ່ວຍທົດແທນທີ່ຕ້ອງໄດ້ຢຸດຮຽນໃນລະບົບສາມັນ, ເພື່ອຕໍ່ຕ້ານກັບວິກິດການຮຽນທີ່ຮ້າຍແຮງ.
- ໃຫ້ໂອກາດໃນການສະທ້ອນໃຫ້ເຫັນເຖິງຄ່ານິຍົມທົ່ວໄປ ເຊັ່ນ: ຄວາມຮັບຜິດຊອບໃນລະດັບໂລກ, ຄວາມສາມັກຄີ ແລະ ການເປັນພົນລະເມືອງທີ່ຫ້າວຫັນ.
- ລະດົມ ແລະ ຄຸ້ມຄອງກ່ຽວກັບການປະຕິບັດຂອງຊຸມຊົນ, ເນື່ອງຈາກຜູ້ໃຫ້ບໍລິການການຮຽນຮູ້ ແລະ ການສຶກສາຜູ້ໃຫຍ່ສ່ວນຫຼາຍແມ່ນຢູ່ໃນຂັ້ນທ້ອງຖິ່ນ ແລະ ໃກ້ຊິດຕິດແທດກັບປະຊາຊົນ.

## ພັດທະນາຂໍ້ສະເໜີໃໝ່

ໃນທົ່ວທຸກມຸມໂລກ, ກິດຈະກໍາການຮຽນຮູ້ແບບໜ້າຕໍ່ໜ້າກໍາລັງຈະຢຸດລົງ ເຊິ່ງຈະເຮັດໃຫ້ຜູ້ເຂົ້າຮ່ວມຂາດຄວາມກະຕືລືລົ້ນທີ່ຈະມີສ່ວນຮ່ວມໃນໂອກາດການຮຽນຮູ້ທີ່ສໍາຄັນ. ໃນດ້ານການສະໜອງ, ຜູ້ໃຫ້ບໍລິການການຮຽນຮູ້ ແລະ ການສຶກສາຜູ້ໃຫຍ່ ແລະ ຄູສອນອິດສະຫຼະຈໍານວນຫຼາຍກໍາລັງຜະເຊີນກັບສະຖານະການດ້ານເສດຖະກິດ. ໃນຂະນະດຽວກັນ, ລັກສະນະຂອງຂະແໜງການຮຽນຮູ້ ແລະ ການສຶກສາຜູ້ໃຫຍ່ແມ່ນມີຄວາມຍືດຢຸ່ນ ແລະ ອີງຕາມຄວາມຕ້ອງການຂອງຜູ້ຮຽນ ແລະ ສັງຄົມ ເພື່ອໃຫ້ເໝາະສົມກັບການພັດທະນາຄວາມຄິດສ້າງສັນ, ແລະ ຕອບສະໜອງຢ່າງທັນເຫດການ:

- ຊຸກຍູ້ໂອກາດການຮຽນຮູ້ໃນດ້ານດິຈິຕອລໃຫຜູ້ເຂົ້າຮ່ວມ, ລວມທັງການສ້າງເວທີ, ການຝຶກອົບຮົມນອກໂຮງຮຽນ ແລະ ຫຼັກສູດອອນໄລ (ທີ່ມີໃບຢັ້ງຢືນ).
- ສະໜັບສະໜູນພໍ່ແມ່ຜູ້ປົກຄອງໃຫ້ສາມາດເຮັດວຽກອອນໄລໄດ້ ແລະ ຊ່ວຍເຫຼືອລູກຫຼານໃນການຮຽນອອນໄລ.
- ເພີ່ມການເຂົ້າເຖິງໂດຍໃຊ້ເຄື່ອງມື ແລະຊ່ອງທາງສື່ສັງຄົມອອນໄລ ແລະ ໃຊ້ວິທີການຮຽນທາງໄກແບບດັ້ງເດີມເຊັ່ນ: ການຮ່ວມມືກັບສະຖານີວິທະຍຸ ແລະ ໂທລະພາບ.
- ສະໜອງການບໍລິການດ້ານຈິດໃຈ-ສັງຄົມເພື່ອຊ່ວຍໃຫ້ຜູ້ໃຫຍ່



ສາມາດຮັບມືກັບວິກິດການໄດ້.

ຮູບແບບໃໝ່ເຫຼົ່ານີ້ຮຽກຮ້ອງໃຫ້ມີການລົງທຶນໃນການສ້າງສະພາບແວດລ້ອມທີ່ເອື້ອອຳນວຍ:

- ລົງທຶນໃສ່ພື້ນຖານໂຄງລ່າງດິຈິຕອນໃນລະດັບເຄືອຂ່າຍລະດັບປະເທດ ແລະ ພາກພື້ນ ລວມທັງຜູ້ໃຫ້ບໍລິການໃນທ້ອງຖິ່ນ ແລະ ຈັດຫາອຸປະກອນດິຈິຕໍ່ອລສຳລັບຜູ້ເຂົ້າຮ່ວມທີ່ຢູ່ໃນກຸ່ມສ່ຽງເຊິ່ງພວກເຂົາບໍ່ມີທາງເລືອກຫຼາຍ.
- ຝຶກອົບຮົມພະນັກງານໃຫ້ສາມາດໃຊ້ຕົວເລືອກດິຈິຕໍ່ອລ ແລະ ໃຫ້ຄຳປຶກສາແກ່ຜູ້ຮຽນ.
- ພັດທະນາໃຫ້ມີໂອກາດທາງອອນລາຍເພີ່ມຂຶ້ນ ເພື່ອເປັນການສ້າງຄວາມອາດສາມາດຂອງບຸກຄະລາກອນການສຶກສານອກໂຮງຮຽນ, ບໍລິຫານ ແລະ ຄູຝຶກ.
- ສະເໜີໃຫ້ມີຊຸມຊົນການຝຶກປະຕິບັດ (CoP) ໃນຮູບແບບດິຈິຕໍ່ອລໃນລະດັບທ້ອງຖິ່ນ, ລະດັບພາກພື້ນ ແລະ ລະດັບສາກົນ ເພື່ອເປັນບ່ອນອຳນວຍຄວາມສະດວກໃນການພັດທະນາຄວາມອາດສາມາດຂອງບຸກຄະລາກອນການຮຽນຮູ້ ແລະ ການສຶກສາຜູ້ໃຫຍ່, ແລກປ່ຽນປະສົບການ ແລະ ສະໜັບສະໜູນເຊິ່ງກັນ ແລະ ກັນ.

ລັດຖະບານ ແລະ ບັນດາຄູ່ຮ່ວມພັດທະນາໄດ້ຖືກຮຽກຮ້ອງໃຫ້ສະໜັບສະໜູນຜູ້ໃຫ້ບໍລິການວຽກງານການຮຽນຮູ້ ແລະ ການສຶກສາຜູ້ໃຫຍ່ໂດຍສະເພາະໃນດ້ານດິຈິຕໍ່ອລ.

## ຮັບປະກັນອະນາຄົດທີ່ຍືນຍົງຂອງ ການຮຽນຮູ້ ແລະ ການສຶກສາຜູ້ໃຫຍ

ສຳລັບຫຼາຍໆຄົນ, ຖ້າບໍ່ແມ່ນຜູ້ໃຫ້ບໍລິການການຮຽນຮູ້ ແລະ ການສຶກສາຜູ້ໃຫຍ່ສ່ວນຫຼາຍ, ນີ້ແມ່ນສ່ວນໜຶ່ງຂອງວິກິດການປະຈຸບັນ ແລະ ມີຄວາມເປັນໄປໄດ້ທີ່ລາຍຮັບຫຼຸດລົງຫຼື ເກືອບວ່າບໍ່ມີເລີຍ (ຄ່າທຳນຽມ, ຢ່າງໜ້ອຍກໍແມ່ນການຢຸດເຊົາໂຄງການຊົ່ວຄາວ), ຫຼາຍຄົນກຳລັງປະສົບບັນຫາຄວາມຫຍຸ້ງຍາກ. ມັນແມ່ນບົດບາດຂອງປະຊາຊົນ ແລະ ລັດຖະບານທົ່ວໂລກເພື່ອຮັບປະກັນການຄົງຢູ່ຂອງຂອງຂະແໜງການຮຽນຮູ້ ແລະ ການສຶກສາຜູ້ໃຫຍ່. ຕ້ອງມີການສະໜັບສະໜູນທາງການເງິນໂດຍກົງ!

ການຮັບຮູ້ເຖິງຄວາມຮັບຜິດຊອບຕົ້ນຕໍຂອງລັດຖະບານແຫ່ງຊາດ, ຍັງມີບາງອັນທີ່ຄູ່ຮ່ວມພັດທະນາ ແລະ ອົງການສາກົນສາມາດເຮັດໄດ້:

- ສະໜັບສະໜູນເຄືອຂ່າຍທີ່ພະຍາຍາມສະໜັບສະໜູນປະຊາຊົນໃນການຮັບມືກັບວິກິດການ
- ສະໜັບສະໜູນນະໂຍບາຍ ແລະ ການປະຕິບັດ ເພື່ອຮັບປະກັນວ່າວິກິດການນີ້ ຈະບໍ່ຖືກນຳໃຊ້ເປັນຂໍ້ອ້າງເພື່ອປະຕິບັດມາດຕະການຕ່າງໆ ທີ່ຈຳກັດພື້ນທີ່ຂອງພາກປະຊາສັງຄົມ
- ຮັບປະກັນວ່າໂຄງສ້າງທີ່ມີຢູ່ນີ້ຈະຖືກໃຊ້ເພື່ອການຈັດຕັ້ງປະຕິບັດທີ່ກ່ຽວຂ້ອງກັບວຽກງານພະຍາດ ໂຄວິດ-19 ນີ້ໂດຍກົງ ບໍ່ແມ່ນເປັນພຽງກົນໄກຄູ່ຂະໜານ (ສ້າງວົງລໍ້ໃໝ່)
- ຈັດທຳແຜນການລະດົມທຶນທີ່ຮັດກຸມ ແລະ ສາມາດປ່ຽນແປງໄດ້ ເພື່ອການປົກປ້ອງສະຖາບັນ ແລະ ບຸກຄະລາກອນຂອງຜູ້ໃຫ້ບໍລິການວຽກງານການຮຽນຮູ້ ແລະ ການສຶກສາຜູ້ໃຫຍ່ ແລະ ເຄືອຂ່າຍ.

ດີວີວີ ອິນເຕີເນເຊິນແນວ ເຫັນບົດບາດຂອງຕົນໃນການສະໜັບສະໜູນຄູ່ຮ່ວມພັດທະນາ ເພື່ອຮັບມືກັບຜົນກະທົບຂອງວິກິດການໂຄວິດ-19 ຢ່າງດີທີ່ສຸດ ແລະ ພັດທະນາຮູບແບບການບໍລິການການຮຽນຮູ້ ແລະ ການສຶກສາຜູ້ໃຫຍ່ທີ່ຈຳເປັນເພື່ອຕອບສະໜອງກັບວິກິດການ. ເຮົາຈະລາຍງານໃຫ້ຮູ້ເປັນໄລຍະກ່ຽວກັບຄວາມຄິດລິເລີ່ມໃໝ່ທີ່ພັດທະນາໂດຍໂຄງການ ແລະ ຄູ່ຮ່ວມພັດທະນາຂອງພວກເຮົາ. ກ່ຽວກັບວິທີການຈັດການກັບວິກິດການ ແລະ ການໃຫ້ບໍລິການປະຊາຊົນ. ໂຄວິດ-19 ເປັນວິກິດການລະດັບໂລກ ເຮົາຄວນຮັບປະກັນວ່າການຕອບສະໜອງນີ້ມັນຈະເກີດຂຶ້ນທົ່ວໂລກ.

# ການໂຕ້ຕອບຂອງ ດີວີວີ ອິນເຕີເນເຊີນແນວ ພາກພື້ນອາຊີ-ຕາເວັນອກສຽງໃຕ

ຫ້ອງການປະຈຳພາກພື້ນອາຊີຕາເວັນອອກສ່ຽງໃຕ້ໄດ້ລິເລີ່ມການຜະລິດຜ້າອັດປາກຜ່ານລະບົບການສຶກສານອກໂຮງຮຽນ (ກສນ) ໃນ ສປປ ລາວ ແລະ ກຳປູເຈຍ. ດັ່ງທີ່ຮູ້ກັນແລ້ວວ່າສະຖາບັນ ກສນ ໃນລາວສ່ວນຫຼາຍແມ່ນສູນການຮຽນຮູ້ຊຸມຊົນ (ສຮຊ) ແລະ ໃນແຂວງສະຫວັນນະເຂດ ເຊິ່ງໄດ້ຮັບທຶນສະໜັບສະໜູນຈາກ ດີວີວີ ອິນເຕີເນເຊີນແນວ ແລະ ໃນກຳປູເຈຍຮຽກວ່າ ສຮຊ ແບບທົດລອງ ໄດ້ເລີ່ມຜະລິດຜ້າອັດປາກເພື່ອແກ້ໄຂບັນຫາການຂາດແຄນທີ່ເກີດຂຶ້ນຍ້ອນວິກິດການ ໂຄວິດ-19. ໃນບາດກ້າວທີສອງ ເມື່ອສະຖານະການເລີ່ມຜ່ອນຄາຍລົງ ກິດຈະກຳນີ້ກໍຈະເປັນການສ້າງລາຍໄດ້ໃຫ້ແກ່ ສຮຊ.

## ການຜະລິດຜ້າອັດປາກ

ຢູ່ໃນກຳປູເຈຍ, ພາຍຫຼັງທີ່ໄດ້ພັດທະນາ ສຮຊ ໃຫ້ເປັນມາດຕະຖານໃໝ່ ດີວີວີ ອິນເຕີເນເຊີນແນວ ກຳລັງທົດລອງໃຊ້ມາດຕະຖານໃໝ່ນີ້ ກັບ ສຮຊ 10 ແຫ່ງ ທົ່ວປະເທດ. ໃນບໍລິບົດຂອງການລະບາດຂອງໂຄວິດ-19, ດີວີວີ ອິນເຕີເນເຊີນແນວໄດ້ຈັດສັນໃຫ້ ສຮຊ 10 ແຫ່ງ ພ້ອມທັງອຸປະກອນເປັນສະຖານທີ່ສຳລັບການຜະລິດໜ້າກາກ. ດັ່ງນັ້ນ, ພວກເຂົາຈຶ່ງສາມາດຕອບສະໜອງຄວາມຕ້ອງການຂອງຜ້າອັດປາກທີ່ຂາດແຄນໄດ້ຢ່າງທັນການ. ໃນໂລຍະກາງການຜະລິດຜ້ອັດປາກກໍຄວນທັນປ່ຽນເປັນລາຍຮັບໄດ້.

## ສອນວິທີຫຍິບຜ້າອັດປາກ

ເພື່ອກະກຽມໃນການຜະລິດຜ້າອັດປາກ, ສູນພັດທະນາການສຶກສານອກໂຮງຮຽນໃນ ສປປ ລາວ ໄດ້ຈັດທຳວີດີໂອສາທິດໃນການຫຍິບຜ້າອັດປາກ ເຊິ່ງສະໜັບສະໜູນໂດຍດີວີວີ ອິນເຕີເນເຊີນແນວ. ໃນວີດີໂອໄດ້ອະທິບາຍວິທີການເຮັດຜ້າອັດປາກຮູບແບບຕ່າງໆ ໂດຍອີງໃສ່ໃນບາງທ້ອງຖິ່ນທີ່ອາດຫາວັດສະດຸໃນການຫຍິບໄດ້ແຕກຕ່າງກັນ. https://www.youtube.com/watch?v=FJITLnM7VQ8







# ຖະແຫຼງການຂອງ ASPBAE ປົກປ້ອງການສຶກສາ ແລະ ສ້າງຄວາມເປັນນ້ຳໜຶ່ງໃຈດຽວກັນໃນທົ່ວໂລກ ພະຍາຍາມຕໍ່ສູ້ກັບການລະບາດຂອງ ໂຄວິດ-19

ສະມາຄົມອາຊີ-ປາຊີຟິກເພື່ອການສຶກສາຂັ້ນພື້ນຖານ ແລະ ການສຶກສາຜູ້ໃຫຍ່ (ASPBAE-ອາສເບ) ຮ່ວມກັບຊຸມຊົນໃນທົ່ວໂລກ ສະແດງ ວາມກັງວົນກ່ຽວກັບ ການແຜ່ລະບາດຂອງ ໂຄວິດ-19 ທີ່ກໍ່ໃຫ້ເກີດຄວາມ ຫຍຸ້ງຍາກລຳບາກຢ່າງບໍ່ສາມາດທຽບໄດ້ກັບຊີວິດຂອງຄົນທົ່ວໂລກ, ເຮັດໃຫ່ກຸ່ມທີ່ມີຄວາມສ່ຽງຫຼາຍທີ່ສຸດໄດ້ສຳຜັດ ແລະ ຮັບຜົນກະທົບຫຼາຍທີ່ສຸດ. ກໍລະນີການຕິດເຊື້ອ ແລະ ການເສຍຊີວິດທີ່ໄດ້ຮັບການ ຢັ້ງຢືນຍັງຄົງເພີ່ມຂຶ້ນໃນທົ່ວໂລກລວມທັງໃນບັນດາປະເທດທີ່ກຳລັງພັດທະນາໃນພາກພື້ນອາຊີ-ປາຊີຟິກ ເຊິ່ງ ລະບົບປ້ອງກັນສຸຂະພາບ ຍັງເປັນສິ່ງທ້າທາຍຢ່າງຫຼວງຫຼາຍ. ຄົນຫຼາຍຮ້ອຍລ້ານຄົນຕ້ອງ ຫວ່າງງານ ຫຼື ຕົກຢູ່ໃນຄວາມສ່ຽງທີ່ຈະສູນເສຍວິທີການຫາລ້ຽງຊີບ ເຊິ່ງນັ້ນອາດເປັນພຽງອາຊີບດຽວຂອງພວກເຂົາ. ອີງຕາມອົງການ ຢູເນສໂກ, ວັນທີ 3 ເມສາ 2020 ມີຜູ້ຮຽນກວ່າ 1.54 ຕື້ຄົນໄດ້ຮັບຜົນ ກະທົບຈາກການປິດໂຮງຮຽນໃນ 188 ປະເທດ, ເຊິ່ງຄິດເປັນກວ່າ 90% ຂອງປະຊາກອນທີ່ເປັນນັກຮຽນໃນທົ່ວໂລກ. ການຄວບຄຸມໃນ ວົງກວ້າງຈະປິດສູນການຮຽນຮູ້ຊຸມຊົນ (ສຮຊ) ແລະ ໂຄງການ ການຮຽນຮູ້ ແລະ ການສຶກສາສຳລັບຜູ້ໃຫຍ່ອື່ນໆ ໃນທົ່ວພາກພື້ນ.

ເຮົາຢັ້ງຢືນວ່າບໍ່ວ່າວິກິດການຈະເປັນແນວໃດ, ສິດທິໃນການສຶກສາຕ້ອງໄດ້ຮັບການຄຸ້ມຄອງ ແລະ ການຮຽນຮູ້ຈະຕ້ອງດຳເນີນຕໍ່ໄປເນື່ອງຈາກເປັນໜຶ່ງໃນຍຸດທະສາດທີ່ສຳຄັນທີ່ສຸດນການຕອບສະໜອງຕໍ່ກັບວິກິດການນີ້ ແລະ ວິກິດການອື່ນໆ. ເດັກນ້ອຍ ຊາວໜຸ່ມ ແລະ ຜູ້ໃຫຍ່ຕ້ອງຮັບຮູ້ກ່ຽວກັບວິວັດທະນາການຂອງໄວຣັສທີ່ມີການພັດທະນາຢູ່ເລື້ອຍໆ ແລະ ຜົນກະທົບຂອງມັນ ເພື່ອໃຫ້ພວກເຂົາສາມາດຮັບມື ແລະ ປັບຕົວເຂົ້າກັບສະຖານະການທີ່ມີການປ່ຽນແປງຢ່າງໄວວາຂອງວິກິດ ເຊິ່ງມັນສົ່ງຜົນກະທົບໃນວົງກວ້າງ.

ເຮົາສະໜັບສະໜູນທຸກຄວາມພະຍາຍາມຂອງຢູເນສໂກ ແລະ ລັດຖະບານໃນການແກ້ໄຂ ແລະ ປັບໃຊ້ການຮຽນທາງໄກໂດຍນຳໃຊ້ເຕັກໂນໂລຊີທີ່ເໝາະສົມ ແລະ ການຮຽນຮູ້ແບບຍືດຫຍຸ່ນ ລວມທັງແຜນງານການຮຽນຮູ້ໃນທ້ອງຖິ່ນ ແລະ ແຜນງານການຮຽນຮູ້ອີງຕາມຄວາມຕ້ອງການຂອງຊຸມຊົນ. ເຖິງຢ່າງໃດກໍຕາມ ASPBAE ຕັ້ງຂໍ້ສັງເກດວ່າຜູ້ຮຽນສ່ວນຫຼາຍແມ່ນມາຈາກຄອບຄົວທີ່ທຸກຈົນ ແລະ ດ້ອຍໂອກາດ ບໍ່ມີຄວາມສາມາດເຊື່ອມຕໍ່ອິນເຕີເນັດ ແລະ ຂາດຊັບພະຍາກອນໃນການເຂົ້າເຖິງ ແລະ ຮັບເຕັກໂນໂລຊີ ສະຖານະການນີ້ອາດເຮັດໃຫ້ເກີດການແບ່ງປັນທາງດິຈິຕ໋ອລກວ້າງຂຶ້ນ ແລະ ຮີບຮ້ອນ ຈັບພາບຂອງເຕັກໂນໂລຊີການສຶກສາ. ຈົນເຖິງປະຈຸບັນ ບໍລິສັດໄອຊີທີ (ICT) ເອກະຊົນຫຼາຍແຫ່ງກໍໄດ້ຮີບຮ້ອນສົ່ງເສີມການຕະຫຼາດກ່ຽວກັບການຮຽນຮູ້ແບບດິຈິຕ໋ອລຂອງພວກເຂົາ. ພວກເຮົາຮັບຮູ້ເຊັ່ນດຽວກັນວ່າຊົນເຜົ່າກຸ່ມນ້ອຍ, ກຸ່ມຄົນພິການ, ກຸ່ມຜູ້ຖືກກົດຂີ່, ກຸ່ມນັກຮຽນຜູ້ໃຫຍ່ ແລະ ກຸ່ມຄົນດ້ອຍໂອກາດອື່ນໆ ໂດຍສະເພາະເດັກຍິງ ແລະ ແມ່ຍິງໄດ້ຖືກລືມ ແລະ ຖືກເຮັດໃຫ້ເປັນກຸ່ມດ້ອຍໂອກາດ

ເນື່ອງຈາກບໍ່ມີທາງເລືອກໃນການຮຽນຮູ້ທີ່ເໝາະສົມ, ອຸປະສັກດ້ານພາສາ ແລະ ການເລືອກປະຕິບັດໃນສະຖາບັນ. ດັ່ງນັ້ນ, ພວກເຮົາຈຶ່ງຂໍຮຽກຮ້ອງໃຫ້ບັນດາລັດຖະບານ, ບັນດາຄູ່ຮ່ວມພັດທະນາ ແລະ ປະຊາຄົມໂລກ ກວດສອບເພື່ອຮັບປະກັນວ່າຊຸມຊົນສາມາດເຂົ້າເຖິງເຕັກໂນໂລຊີທີ່ເປີດກວ້າງ ແລະ ເຄື່ອງມືທີ່ເໝາະສົມໄດ້ໂດຍບໍ່ເສຍຄ່າ ເຊິ່ງຊ່ວຍສິ່ງອຳນວຍຄວາມສະດວກໃຫ້ແກ່ການຮຽນຮູ້ທາງໄກ ແລະ ແຜນການຮຽນຮູ້ໂດຍອີງຕາມຊຸມຊົນ, ສະເໜີໃຫ້ມີການສຶກສາ ແລະ ການຮຽນຮູ້ທີ່ມີຄຸນນະພາບຕາມບໍລິບົດໃຫ້ແກ່ກຸ່ມສ່ຽງ ແລະ ກຸ່ມທີ່ຖືກກົດກັນ.

ຄູ, ຄູຝຶກ ແລະ ບຸກຄະລາກອນການສຶກສາ ແມ່ນຍັງມີຄວາມຕ້ອງການຫຼາຍເພື່ອຮັບປະກັນໃຫ້ການສຶກສາມີຄວາມຕໍ່ເນື່ອງໃນໄລຍະການລະບາດຂອງໂຄວິດ-19. ຄວາມປອດໄພ, ຄວມສຸກ, ຄວາມໝັ້ນຄົງດ້ານອາຊີບ, ການຝຶກອົບຮົມ ແລະ ການສະໜັບສະໜູນ ຄວນໄດ້ຖືກຮັບຮອງໃຫ້ເປັນບູລິມະສິດສຳຄັນ ເພື່ອຊ່ວຍໃຫ້ພວກເຂົາພະຍາຍາມເຂົ້າເຖິງທຸກຄົນ, ເຖິງວ່າຈະເປັນຜູ້ຮຽນທີ່ເຂົ້າເຖິງຍາກທີ່ສຸດ ເຊັ່ນ: ໃນເຂດຫ່າງໄກສອກຫຼີກ, ກຸ່ມທີ່ມີຄວາມຕ້ອງການພິເສດ ໂດຍຈະຕ້ອງນຳໃຊ້ວິທີການທີ່ເໝາະສົມອີງຕາມບໍລິບົດຂອງຜູ້ຮຽນ.

ການສູນເສຍຄວາມເປັນຢູ່ ແລະ ລາຍໄດ້ເນື່ອງມາຈາກມາດຕະການເຂັ້ມງວດ ແລະ ການກັກບໍລິເວນເຮັດໃຫ້ຜູ້ຮຽນທີ່ທຸກຈົນບໍ່ສາມາດມີສ່ວນຮ່ວມໃນກິດຈະກຳການສຶກສາ ແລະ ການຮຽນຮູ້ໄດ້. ອີງຕາມລາຍງານຂອງໂຄງການອາຫານໂລກ ໂຮງຮຽນໄດ້ຖືກປິດ ແລະ ມີນັກຮຽນທົ່ວໂລກກວ່າ 368 ລ້ານຄົນ ທີ່ຕ້ອງຢຸດຮຽນ ແລະ ບໍ່ໄດ້ກິນເຂົ້າ



ຫ່ງງຢູ່ໂຮງຮຽນເຊິ່ງພວກເຂົາເຫຼົ່ານີ້ແມ່ນອາໄສຄາບອາຫານນີ້ເປັນຫຼັກ. ແມ່ຍິງຕ້ອງປະຕິບັດໜ້າທີ່ຫຼາຍຢ່າງໃນໄລຍະການແຜ່ລະບາດ ຍ້ອນວ່າເຂົາເຈົ້າໄດ້ເຮັດວຽກພາຍໃນເຮືອນເພີ່ມຂຶ້ນ, ມີຄວາມຮັບຜິດຊອບຕໍ່ສຸຂະພາບຫຼາຍຂຶ້ນ ແລະ ລວມທັງເພີ່ມພາລະການສອນ ໃນຂະນະທີ່ພວກເຂົາຕໍ່ສູ້ເພື່ອອາຫານ ແລະ ການດໍາລົງຊີວິດເພື່ອລ້ຽງຄອບຄົວ. ເຄືອຂ່າຍຄວາມປອດໄພທາງສັງຄົມຮວບຮວມຊັບພະຍາ-ກອນໄວ້ໃນມື ແລະ ຄວບຄຸມແມ່ຍິງເຊັ່ນ ການໂອນເງິນ, ຄວາມຊ່ວຍເຫຼືອດ້ານອາຫານ ແລະ ມາດຕະການອື່ນໆ ທີ່ປົກປ້ອງວຽກງານແມ່ຍິງຈະຕ້ອງໄດ້ຖືກຮັບຮອງວ່າເປັນອົງປະກອບສໍາຄັນເພື່ອໃຫ້ແນ່ໃຈວ່າການຮຽນຮູ້ຈະດໍາເນີນຕໍ່ໄປ.

ພວກເຮົາມີຄວາມເປັນຫ່ວງທີ່ຈະເຫັນມາດຕະການຜະເດັດການຖືກນໍາມາໃຊ້ ເພື່ອຫຼີກລ່ຽງຂະບວນການປະຊາທິປະໄຕ ແລະ ຄວາມຮັບ-ຜິດຊອບໃນການຕອບໂຕ້ກັບສະພາບການທີ່ສຸກເສີນໃນຫຼາຍປະເທດ. ສຽງ ແລະ ໜ່ວຍງານຂອງປະຊາຊົນຄວນໄດ້ຮັບການເສີມສ້າງ ແລະ ຮັບຟັງໃນການກໍານົດແນວທາງຕອບສະໜອງຕໍ່ວິກິດ ຈາກນັ້ນຈະພົບວິທີການແກ້ບັນຫາທີ່ຍືນຍົງ, ກ່ຽວຂ້ອງ ແລະ ມີປະສິດທິຜົນ; ແກ້ບັນຫາບໍ່ຖິ້ມໃຜໄວ້ທາງຫຼັງ. ພວກເຮົາຂໍຮຽກຮ້ອງໃຫ້ລັດຖະບານປະຕິບັດຕາມມາດຕະຖານສິດທິມະນຸດຂອງສາກົນ ແລະ ນໍາແນວທາງມາໃຊ້ໃນການຕອບສະໜອງຕໍ່ການແຜ່ລະບາດຄັ້ງນີ້.

ອາສເບ ໃຫ້ຂໍ້ສັງເກດວ່າປະຈຸບັນລັດຖະບານກໍາລັງຈັດສັນງົບປະມານແຫ່ງຊາດຂອງພວກເຂົາ ເພື່ອແກ້ໄປບັນຫາສຸກເສີນດ້ານສຸຂະພາບ ແລະ ໃຫ້ຄວາມຊ່ວຍເຫຼືອທາງສັງຄົມແກ່ກຸ່ມສ່ຽງ. ການຫຼຸດງົບປະມານ ແລະ ການປັບໂຄງສ້າງໃໝ່ອາດເປັນເລື່ອງທີ່ເລິກເຊິ່ງ ແລ ອາດສົ່ງຜົນກະທົບຕໍ່ການຈັດສັນງົບປະມານເພື່ອການສຶກສາ. ງົບປະມານເພີ່ມເຕີມທີ່ຄາດການໄວ້ສໍາລັບໄລຍະການຟື້ນໂຕຂອງວິກິດການດ້ານສຸຂະພາບ ເພື່ອລວມເປັນມາດຕະການກະຕຸ້ນເພື່ອແກ້ໄຂຄວາມສູນເສຍທາງດ້ານເສດຖະກິດທີ່ໃຫຍ່ຫຼວງ, ສາມາດກະຈາຍມາຍັງປະເທດທີ່ມີເງື່ອນໄຂຕໍ່າໂດຍສະເພາະປະເທດທີ່ມີລາຍໄດ້ຕໍ່າ ແລະ ປະເທດ ທີ່ກໍາລັງພັດທະນາ. ເຮົາຂໍ ຮຽກຮ້ອງໃຫ້ລັດຖະບານເສີມສ້າງຄວາມເຂັ້ມແຂງໃນການແກ້ໄຂ ແລະ ປົງປ້ອງ ງົບປະມານຂອງພາກປະຊາສັງຄົມ ເພື່ອຈະນໍາມາ ເສີມສ້າງຕໍ່ລະບົບ ຮັກສາສຸຂະພາບ, ການສຶກສາ ແລະ ການປົກປ້ອງສັງຄົມ ເພື່ອຟື້ນໂຕຢ່າງເຕັມທີ່ຈາກວິກິດນີ້ນອກຈາກນີ້ເຮົາຍັງຮຽກຮ້ອງໃຫ້ປະຊາຄົມສາກົນ ລະດົມຊັບພະຍາກອນທີ່ຈໍາເປັນ ແລະ ມາດຕະການຂອງສະຖາບັນເຊັ່ນ: ການບັນເທົາໜີ້ ເພື່ອສະໜັບສະໜູນປເທດທີ່ມີລາຍໄດ້ຕໍ່າ ແລະ ປານກາງໃນການພະຍາຍາມທີ່ຈະລົງທຶນໃຫ້ປະຊາຊົນໂດຍຜ່ານການສຶກສາ ເຊິ່ງເປັນຍຸດທະສາດສໍາຄັນ ສໍາລັບການຟື້ນ ໂຕທາງ ເສດຖະກິດ, ການຂະຫຍາຍໂຕ ແລະ ການພັດທະນາໂດຍລວມ.


© www.aspbae.org

ອາສເບ ຢູ່ບົນພື້ນຖານຄວາມເປັນນໍ້າໜຶ່ງໃຈດຽວກັນຮ່ວມກັບບັນດາພາກປະຊາສັງຄົມ ແລະ ປະຊາຄົມໂລກເພື່ອຕໍ່ສູ້ກັບການລະບາດຂອງໂຄວິດ-19. ເຮົາຈະຮ່ວມມືດ້ວຍຄວາມພະຍາຍາມເພື່ອໃຫ້ມີການສຶກສາ ແລະ ການຮຽນຮູ້ສໍາລັບເດັກນ້ອຍ, ຊາວໜຸ່ມ ແລະ ຜູ້ໃຫຍ່ດໍາເນີນໄປຢ່າງຕໍ່ເນື່ອງ, ໂດຍການສົ່ງເສີມຂໍ້ມູນທີ່ເປັນຈິງ ແລະ ຕໍ່ສູ້ກັບຂໍ້ມູນທີ່ບິດເບືອນແລະຂ່າວປອມດ້ວຍການສ້າງໜ່ວຍງານຂອງປະຊາຊົນໃນການຕອບສະໜອງຕໍ່ວິກິດການ ແລະຜົນກະທົບຂອງມັນ; ໂດຍການກວດສອບຄວາມຮັບຜິດຊອບຂອງລັດຖະບານ ແລະ ການສະໜັບສະໜູນຂອງສາກົນ ເພື່ອໃຫ້ປະເທດຕ່າງໆ ຜ່ານພົ້ນຈາກວິກິດການນີ້ ດ້ວຍຄວາມເທົ່າທຽວທາງການສຶກສາ, ການຮັກສາສຸຂະພາບ, ໂພຊະນາການ ແລະ ການຄຸ້ມຄອງສັງຄົມສໍາລັບທຸກຄົນ.

# ໂຄງການຝຶກອົບຮົມສຳລັບຜູ້ບໍລິຫານສູນການຮຽນຮູ້ຊຸມຊົນໃນກຳປູເຈຍ



ຜູ້ອຳນວຍການ ປະຈຳປະເທດ ກຳປູເຈຍ

*Vanna Peou,* ດີວີວີ ອິນເຕີແນເຊິນແນວ ກຳປູເຈຍ

ເນື່ອງຈາກບຸກຄະລາກອນໃນສູນການຮຽນຮູ້ຊຸມຊົນ (ສຮຊ) ໃນກຳປູເຈຍຍັງຂາດທັກສະຄວາມເປັນມືອາຊີບ, ດີວີວີ ອິນເຕີເນເຊິນແນວ ຮ່ວມມືກັບສະມາຄົມອາຊີ-ປາຊີຟິກເພື່ອການສຶກສາຂັ້ນພື້ນຖານ ແລະ ການສຶກສາຜູ້ໃຫຍ່ (ASPBAE) ແລະ ມະຫາວິທະຍາໄລການຮຽນຮູ້ຜູ້ໃຫຍ່ທີ່ເມືອງເມວເບີນ (University of Adult Learning in Melbourne) ໄດ້ຈັດຝຶກອົບຮົມຫຼັກສູດການບໍລິຫານສຳລັບສະມາຊິກ ສຮຊ ໃນກຳປູເຈຍ. ຫຼັກສູດຝຶກອົບຮົມນີ້ໃຊ້ເວລາ 2 ປີ ເລີ່ມແຕ່ປີ 2019 ເຖິງປີ 2021 ເຊິ່ງປະກອບດ້ວຍ 6 ພາກ, ພາກທີ 1 ແລະ ພາກທີ 2 ແມ່ນ ສຳເລັດການຝຶກອົບຮົມແລ້ວໃນທ້າຍປີ 2019 ແລະ ຕົ້ນປີ 2020, ເຮົາຫວັງວ່າຈະດຳເນີນການຝຶກອົບຮົມສຳລັບພາກທີ 3 - 6 ໃນປີ 2021 ແຕ່ລະພາກຈະໃຊ້ເວລາໃນການຝຶກອົບຮົມ 4 ວັນ.

ການຝຶກອົບຮົມພາກທີ 1 ແລະ ພາກທີ 2 ດຳເນີນການໂດຍໃຊ້ວິທີການແບບມີສ່ວນຮ່ວມ, ລວມທັງກິດຈະກຳການຮຽນຮູ້ ເພື່ອຮັບປະກັນໃຫ້ຜູ້ຮຽນມີສ່ວນຮ່ວມໃນຂະບວນການຮຽນຮູ້ຢ່າງເຕັມສ່ວນ. ແຕ່ລະກິດຈະກຳຈະໃຊ້ເວລາປະມານ 1 ຊົ່ວໂມງ 30 ນາທີ ເພື່ອກະຕຸ້ນໃຫ້ຜູ້ເຂົ້າຮ່ວມໄດ້ແບ່ງປັນປະສົບການ ແລະ ຖາມ-ຕອບ ເພື່ອພັດທະນາການຮຽນຮູ້ໃຫ້ເລິກເຊິ່ງຍິ່ງຂຶ້ນ.

ການຝຶກອົບຮົມນີ້ໄດ້ກວມເອົາ: ຄວາມແຕກຕ່າງລະຫວ່າງການສຶກສານອກໂຮງຮຽນ (ກສນ) ແລະ ໃນໂຮງຮຽນ ທັງໃນດ້ານທິດສະດີ ແລະ ວິທີການ; ແນວຄວາມຄິດຂອງ ກສນ ແລະ ການພັດທະນາທັກສະ; ແນວຄວາມຄິດຂອງ ກສນ ແລະ ການພັດທະນາຊຸມຊົນ; ແນວຄາມຄິດຂອງ ສຮຊ ແລະ ມາດຕະຖານຂອງ ສຮຊ; ນະໂຍບາຍການຮຽນຮູ້ຕະຫຼອດຊີວິດ ແລະ ນະໂຍບາຍ ກສນ; ທິດສະດີການຮຽນຮູ້ຂອງຜູ້ໃຫຍ່ ແລະ ເດັກນ້ອຍ. ແຮງຈູງໃຈໃນການຮຽນຮູ້ຂອງຜູ້ໃຫຍ່; ວິທີການຮຽນຮູ້ສຳລັບຜູ້ໃຫຍ່; ຫຼັກການສອນຜູ້ໃຫຍ່, ແນວຄວາມຄິດຂອງການຮຽນຮູ້ຕະຫຼອດຊີວິດ; ຄວາມສຳພັນກັນລະຫວ່າງການຮຽນຮູ້ຕະຫຼອດຊີວິດ, ໃນໂຮງຮຽນ, ນອກໂຮງຮຽນ ແລະ ການສຶກສາຕາມອັດທະຍາໄສ; ຄວາມສຳພັນກັນລະຫວ່າງການຮຽນຮູ້ຕະຫຼອດຊີວິດ ແລະ ເປົ້າໝາຍການພັດທະນາແບບຍືນຍົງ ແລະ ກອບແນວຄວາມຄິດພາກພື້ນ (ASEAN, SEAMEO); ວິທີການທີ່ະເຮັດໃຫ້ຜູ້ເຂົ້າຮ່ວມເກີດຄວາມເຂົ້າໃຈ ແລະ ອອກແບບ ສຮຊ ຂອງຕົນໃຫ້ເປັນສູນການຮຽນຮູ້ຕະຫຼອດຊີວິດ ແລະ ການຮຽນຮູ້ ແລະ ການສຶສາຜູ້ໃຫຍ່; ການສື່ສານແນວຄວາມຄິດເຫຼົ່ານີ້ໃຫ້ກັບບຸກຄະລາກອນໃນ ສຮຊ ແລະ ຄູ່ຮ່ວມງານ; ການຈັດກອງປະຊຸມ ແລະ ອຳນວຍຄວາມສະດວກໃນການຈັດອະພິປາຍ (ບົດບາດຂອງຜູ້ອຳນວຍຄວາມສະດວກ) ໂດຍຜ່ານວິທີການ ແລະ ເຕັກນິກການມີສ່ວນຮ່ວມ; ແນວຄວາມຄິດພື້ນຖານຂອງການສື່ສານ (ຜູ້ສົ່ງ-ຜູ້ຮັບ) ແລະ ເຄື່ອງມືການສື່ສານ(ເຊັ່ນ: ບົດນຳສະເໜີ); ວິທີການສື່ສານກັບກຸ່ມເປົ້າໝາຍ ທັກສະການຟັງ ແລະ ການເວົ້າ ແລະ ການນຳສະເໜີແຜນ; ຄວາມໝາຍຂອງທີມ, ບົດບາດໃນທີມ, ການເຮັດວຽກ ແລະ ການແບ່ງງານໃນທີມ; ວິທີການລະດົມ ແລະ ສ້າງແຜນທີ່ຊຸມຊົນ ແລະ ສຮຊ; ວິທີການລະບຸບັນຫາຂອງຊຸມຊົນ.

ຜົນການວິໄຈທີ່ສຳຄັນ ແລະ ຂໍ້ສະເໜີແນະຂອງຜູ້ເຂົ້າຮ່ວມ:

- ຜູ້ເຂົ້າຮ່ວມເຫັນວ່າການຝຶກອົບຮົມນີ້ແມ່ນມີຄວາມສຳຄັນຫຼາຍ. ເຖິງແມ່ນວ່າເຂົາເຈົ້າຈະເຮັດວຽກກັບ ສຮຊ ມາແລ້ວ 4 ປີ ແຕ່ເຂົາເຈົ້າກໍບໍ່ເຄີຍໄດ້ຮັບການຝຶກອົບຮົມມາກ່ອນເລີຍ.
- ວິທີການຝຶກອົບຮົມແບບມີສ່ວນຮ່ວມໄດ້ພິສູດແລ້ວວ່າມັນເປັນປະໂຫຍດຫຼາຍສຳລັບການສຶກສາຜູ້ໃຫຍ່. ຜູ້ເຂົ້າຮ່ວມມີຄວາມຕັ້ງໃຈທີ່ຈະນຳວິທີນີ້ໄປໃຊ້ກັບເພື່ອຮ່ວມງານໃນການເຮັດວຽກໃນ ສຮຊ.
- ຜູ້ເຂົ້າຮ່ວມມີຄວາມໝັ້ນໃຈທີ່ຈະສະແດງອອກ ແລະ ແບ່ງປັນປະສົບການ ແລະ ມຸມມອງຂອງພວກເຂົາຢ່າງເປີດເຜີຍ.
- ຜູ້ເຂົ້າຮ່ວມສາມາດພິຈາລະນາວິທີການໝູນໃຊ້ສິ່ງທີ່ຮຽນຮູ້ມາຈາກ ສຮຊ ໂດຍການຈົດບັນທຶກປະຈຳວັນ.
- ຜູ້ເຂົ້າຮ່ວມເພີດເພີນກັບການຝຶກອົບຮົມໃນພາກທີ 1 ເຊິ່ງຈັດຢູ່ Daun Keo ( ແຂວງ Takeo) ແລະ ພາກທີ 2 ທີ່ຈັດຢູ່ໂຮງແຮມ Sunway ໃນນະຄອນພະນົມເປັນ. ພວກເຂົາໄດ້ຮັບຄວາມຮູ້ດ້ານວິຊາການບໍລິຫານ ແລະ ກິດຈະກຳທີ່ສະທ້ອນການຮຽນຮູ້ ແຕ່ລະ



ບົດຮຽນເຮັດໃຫ້ພວກເຂົາມີຄວາມຫວັງ, ມີຄວາມເຂົ້າໃຈທີ່ກວ້າງຂຶ້ນ ແລະ ມີຄວາມໝັ້ນໃຈໃນການແລກປ່ຽນຄວາມຮູ້ກັບຄົນອື່ນໃນຊຸມຊົນແລະ ສະຖາບັນ.

ໃນນາມຕາງໜ້າຂອງ ຫອງການດີວີວີ ອິນເຕີເນເຊິນແນວ ຂໍສະແດງຄວາມຂອບໃຈມາຍັງ ທ່ານ ນາງ Anita Borka, ທ່ານ ສ.ຈ Robbie ແລະ ທ່ານ Phork Sovann ທີ່ພະຍາຍາມຢ່າງເຕັມທີ່ເພື່ອມອບຄວາມຮູ້ ແລະ ທັກສະ ໃຫ້ບັນດຜູ້ເຂົ້າຮ່ວມ. ຫວັງຢ່າງຍິ່ງວ່າ ທ່ານ ນາງ Anita ແລະ ທ່ານ ສ.ຈ Robbie ຈະສືບຕໍ່ເຮັດວຽກກັບພາກຕໍ່ໄປເຊັ່ນກັນ ແລະ ຈະເຮັດໃຫ້ພາກອື່ນໆມີຄວາມເພີດເພີນຄືດັ່ງພາກທີ 1 ແລະ ພາກທີ 2.



ຜູ້ບໍລິຫານໂຄງການຂອງພວກເຮົາ ຮັບຜິດຊອບວຽກງານພັດທະນາ ທັກສະ ແລະ ການພົວພັນ

# ການຮ່ວມມືສະໜັບສະໜູນການຝຶກວິຊາຊີບເຄື່ອນທີ່ນອກໂຮງຮຽນ ລະຫວ່າງ ດີວີວີ ອິນເຕີເນເຊິນແນວ- ກົມອາຊີວະສຶກສາ ແລະ ກົມການສຶກສານອກໂຮງຮຽນ (DVVI-DVET-DNFE) ສົກປີ 2019

*ຂັນທອງ ອິນທະຈັກ,* ດີວີວີ ອິນເຕີເນເຊິນແນວ ລາວ

ໃນສົກການສຶກສາປີ 2019 ຫ້ອງການ ດີວີວີ ອິນເຕີເນເຊິນແນວ, ກົມອາຊີວະສຶກສາ ແລະ ກົມການສຶກສານອກໂຮງຮຽນ ກະຊວງສຶກສາທິການ ແລະ ກິລາ ໄດ້ສຶກສາຄົ້ນຄວ້າ ແລະ ວາງແຜນຮ່ວມກັນໃນການສະໜັບສະໜູນການຈັດຝຶກອົບຮົມ ວິຊາຊີບ ເຄື່ອນທີ່ນອກໂຮງຮຽນ ໃຫ້ກຸ່ມເປົ້າໝາຍທີ່ດ້ອຍໂອກາດໃນເຂດຊົນນະບົດຫ່າງໄກສອກຫລີກ ເຊິ່ງເປັນບ້ານສາມສ້າງທີ່ຂຶ້ນກັບແຜນພັດທະນາຂອງໂຮງຮຽນວິຊາຊີບ ແບບປະສົມ ແລະ ສູນການສຶກສານອກ ໂຮງຮຽນຂອງ 3 ພາກ ຄື ພາກເໜືອ ພາກກາງ ແລະ ພາກໃຕ້. ງົບປະມານທັງໝົດທີ່ຫ້ອງການ ດີວີວີ ອິນເຕີເນເຊິນແນວ ໄດ້ສະໜັບສະໜູນຈຳນວນ: 114,912,600 ກີບ. ເນື້ອໃນການຝຶກອົບຮົມສຳລັບໂຮງຮຽນ ເຕັກນິກວິຊາຊີບແບບປະສົມມີ 4 ຫົວຂໍ້ ການຝຶກຄື: ການປິ່ນປົວ ແລະ ປ້ອງກັນພະຍາດສັດໃຫຍ່, ເຕັກນິກການປູກເຫັດນາງລົມໃສ່ຖົງຂີ້ເລື່ອຍ, ການປູກຜັກອິນຊີ ແລະ ການປູກເຫັດນາງຟ້າ ແລະ ເນື້ອໃນການຝຶກອົບຮົມສຳລັບສູນການສຶກສານອກໂຮງຮຽນ 3 ພາກ ແລະ ສູນການສຶກສານອກໂຮງຮຽນຂອງເມືອງມີ 4 ຫົວຂໍ້: ການປຸງແຕ່ງອາຫານ, ການປູກເຫັດນາງລົມ-ນາງຟ້າ, ການລ້ຽງ ແລະ ການປ້ອງກັນ ພະຍາດງົວ-ຄວາຍ ແລະ ແບ້ ແລະ ການສ້ອມແປງລົດຈັກ. ໄລຍະເວລາການຝຶກອົບຮົມ 5-6 ວັນ, ຈຳນວນຜູ້ເຂົ້າຮ່ວມທັງໝົດຂອງ 2 ພາກສ່ວນ 228 ຄົນ, ຍິງ 95 ຄົນ ແລະ ການຈັດກອງປະຊຸມທົບທວນຄືນສຳລັບການຈັດຝຶກອົບຮົມໃນປີ 2019 ແມ່ນຈະໄດ້ຈັດຂຶ້ນໃນເວລາອັນໃກ້ນີ້ ແລະ ການຈັດການຝຶກອົບຮົມຂອງສົກສຶກສາ 2020 ແມ່ນຈະໄດ້ປຶກສາຫາລືຮ່ວມກັບ 2 ກົມດັ່ງກ່າວເພື່ອວາງແຜນໃນຂັ້ນຕໍ່ໄປ.



ຝຶກອົບຮົມການແປງລົດຈັກໃຫ້ຊາວບ້ານທີ່ເມືອງນອງ

# ການຝຶກອົບຮົມຄູຝຶກຫັດ ແລະ ຄວາມສຳເລັດໃນອະນາຄົດຂອງການສຶກສາຜູ້ໃຫຍ່ໃນປະເທດລາວ

*Richard Isaiah Peters,* ດີວີວີ ອິນເຕີເນເຊິນແນວ ລາວ



ນັກສຶກສາຝຶກງານຂອງ ພວກເຮົາ ປະຈຳຫ້ອງ ການພາກພື້ນ

*"[...] ການຝຶກອົບຮົມຄູຝຶກຫັດ ເໝາະສົມທີ່ຈະປັບປຸງຄຸນນະພາບການສຶກສານອກໂຮງຮຽນ."*

ຫ້ອງການ ດີວີວີ ອິນເຕີເນເຊິນແນວ ແລະ ກົມການສຶກສານອກໂຮງຮຽນໄດ້ດຳເນີນໂຄງການຝຶກອົບຮົມຫຼັກສູດການຝຶກອົບຮົມຄູຝຶກຫັດ (ToMT) ໃນປີ 2015-2017. ມີຜູ້ເຂົ້າຮ່ວມມາຈາກສະຖາບັນຕ່າງໆ ສ່ວນຫຼາຍແມ່ນມາຈາກສູນການສຶກສານອກໂຮງຮຽນ ທີ່ຂຶ້ນກັບກະຊວງສຶກສາທິການ ແລະ ກິລາ, ລວມທັງສະຫະພັນແມ່ຍິງ, ສູນກາງຊາວໜຸ່ມ, ສູນຝຶກອົບຮົມວິຊາຊີບ ແລະ ມະຫາວິທະຍາໄລແຫ່ງຊາດ. ສອງປີຜ່ານໄປ ຈຶ່ງໄດ້ເລີ່ມມີການເຮັດບົດວິໄຈກ່ຽວກັບຜູ້ທີ່ຮຽນຈົບ. ໂດຍແມ່ນບໍລິສັດທີ່ປຶກສາເພື່ອການພັດທະນາລາວ-ເຢຍລະມັນ (LGDC) ຮັບຜິດຊອບໃນການເຮັດບົດວິໄຈ. ນອກຈາກການສຳພາດແລ້ວຍັງໄດ້ເຮັດແບບສອບຖາມສອງຮູບແບບ ສຳລັບຜູ້ເຂົ້າຮ່ວມ ແລະ ຫົວໜ້າຂອງຜູ້ເຂົ້າຮ່ວມ. 80% ຂອງຜູ້ເຂົ້າຮ່ວມໂຄງການ ToMT ແມ່ນໄດ້ຮ່ວມໃນການເຮັດບົດວິໄຈນີ້.

ຈຸດປະສົງຫຼັກຂອງໂຄງການ ToMT ແມ່ນການຖ່າຍທອດຄວາມຮູ້ ແລະ ທັກສະ ໃຫ້ແກ່ຄູຝຶກຫັດເພື່ອໄປສືບຕໍ່ຝຶກສອນໃນອະນາຄົດ. ການວິໄຈນີ້ໄດ້ວິເຄາະຜົນໄດ້ຮັບຂອງຫຼັກສູດການຝຶກອົບຮົມ ແລະ ວິທີການທີ່ອາດຈະເປັນປະໂຫຍດແກ່ຜູ້ເຂົ້າຮ່ວມບໍ່ວ່າຈະເປັນດ້ານວິຊາການ ແລະ ສ່ວນຕົວ ລວມທັງຜົນໄດ້ຮັບຕໍ່ການສຶກສາຂອງຜູ້ໃຫຍ່ໃນລາວ.

ຜູ້ເຂົ້າຮ່ວມສ່ວນຫຼາຍໄດ້ກ່າວເຖິງຄວາມກ້າວໜ້າໃນການພັດທະນາຕົນເອງ ແລະ ຄວາມເປັນມືອາຊີບ. ນອກຈາກການປັບປຸງຄວາມຮູ້ທົ່ວໄປ ແລະ ທັກສະດ້ານວິຊາການ, ເຂົາເຈົ້າຍັງໄດ້ເລົ່າວ່າ ທັກສະດ້ານອື່ນໆ ກໍເພີ່ມຂຶ້ນເຊັ່ນ: ພາວະຄວາມເປັນຜູ້ນຳ ຫຼື ການມີສ່ວນຮ່ວມຢ່າງຫ້າວຫັນ ເຊິ່ງທັງໝົດນີ້ໄດ້ຮັບການຢັ້ງຢືນຈາກຫົວໜ້າຂອງຜູ້ເຂົ້າຮ່ວມວ່າ ເຂົາເຈົ້າສາມາດປະຕິບັດໜ້າທີ່ໄດ້ດີຂຶ້ນ. ເນື່ອງຈາກຜູ້ເຂົ້າຮ່ວມສ່ວນຫຼາຍແມ່ນມີສ່ວນຮ່ວມໂດຍກົງໃນກິດຈະກຳການສອນ ເຂົາເຈົ້າຈຶ່ງສາມາດໝູນໃຊ້ເນື້ອໃນທີ່ໄດ້ຮຽນມາເຂົ້າໃນການເຮັດວຽກປະຈຳວັນໄດ້ຢ່າງຫ້າວຫັນ. 5 ທ່ານໃນຈຳນວນຜູ້ເຂົ້າຮ່ວມໄດ້ອະທິບາຍວ່າພວກເຂົາໃຊ້ຄວາມຮູ້ທີ່ໄດ້ຮຽນມາ "ຢ່າງຫຼວງຫຼາຍ" ເຂົ້າໃນຊີວິດປະຈຳວັນໃນຂະນະ ທີ່ຄົນອື່ນໆຕອບພຽງແຕ່ "ຫຼາຍ". ຜູ້ຕອບແບບສອບຖາມ ປະມານ 90% ສົ່ງຕໍ່ຄວາມຮູ້ທີ່ໄດ້ມາໃຫ້ແກ່ເພື່ອນຮ່ວມງານ ເພື່ອເປັນການຍົກລະດັບຄວາມຮູ້ຂອງເຂົາເຈົ້າ. ບາງຄົນ ແມ່ນໄດ້ຈັດຝຶກອົບຮົມ ແລະ ຈຳນວນໜຶ່ງແມ່ນໄດ້ປະຕິບັດໂດຍການສາທິດ. ສຳລັບຄຳຖາມກ່ຽວກັບປຶ້ມຄູ່ມື ToMT ວ່າພາກໃດແມ່ທີ່ໄດ້ນຳໃຊ້ຫຼາຍທີ່ສຸດໃນການຝຶກອົບຮົມ ເຊິ່ງໄດ້ຄຳຕອບວ່າແມ່ນພາກກ່ຽວກັບການສື່ສານ ແລະ ການເຮັດ ວຽກເປັນທີມ ລວມທັງເຕັກນິກການສອນຜູ້ໃຫຍ່ ເຊິ່ງໄດ້ຖືກນຳ ໃຊ້ຢູ່ເລື້ອຍໆ. ອີງຕາມການບອກເລົ່າຂອງຜູ້ເຂົ້າຮ່ວມ 26 ທ່ານ ໃນຈຳນວນ 28 ທ່ານ ສົນໃຈເຮັດວຽກເປັນຄູຝຶກ ມີພຽງ 2 ທ່ານ ທີ່ຢາກຮ່ວມຝຶກອົບຮົມເພີ່ມຕື່ມ. ຜູ້ເຂົ້າຮ່ວມ 6 ໃນ 9 ຂອງຜູ້ທີ່ເປັນຫົວໜ້າຜູ້ເຂົ້າຮ່ວມແນະນຳໃຫ້ພະນັກງານຂອງ ເຂົາເຈົ້າຈັດຝຶກອົບຮົມໄດ້ ແລະ ອີກ 3 ທ່ານແມ່ນແນະນຳໃຫ້ຝຶກອົບຮົມເພີ່ມຕື່ມ. ອີງໃສ່ຄຳຖາມຜູ້ເຂົ້າຮ່ວມ ແລະ ຫົວໜ້າຂອງຜູ້ເຂົ້າຮ່ວມຕ້ອງການສະໜັບສະໜູນເພີ່ມຕື່ມເພື່ອໃຫ້ ToMT ສາມາດໝູນໃຊ້ໄດ້ດີຂຶ້ນທັງສອງກຸ່ມບອກວ່າ: ຄວນມີການຝຶກອົບຮົມອີກຄັ້ງ, ປະຕິບັດເພີ່ມຕື່ມ ແລະການທົບທວນຄືນ. ສຳລັບການມີສ່ວນຮ່ວມຂອງ ToMT ໃນວຽກງານການສຶກສາຜູ້ໃຫຍ່ ໃນ ສປປ ລາວ ແມ່ນມີການຕອບຮັບເປັນຢ່າງດີຈາກທັງສອງກຸ່ມ. ມີຫົວໜ້າຂອງຜູ້ເຂົ້າຮ່ວມ ພຽງໜຶ່ງທ່ານທີ່ລະບຸວ່າຍັງຕ້ອງມີອີກຫຼາຍຂັ້ນຕອນກ່ອນທີ່ຈະນຳໄປຈັດຕັ້ງປະຕິບັດ ໃນລະດັບປະເທດ, ສຳລັບຄົນອື່ນໆ ແມ່ນເຫັນວ່າຂ້ອນຂ້າງດີແລ້ວ ແລະ ເຫັນວ່າມີການວາງພື້ນຖານທີ່ດສະດີຂອງ ToMT.

ສະຫຼຸບຜົນການວິໄຈ ອີງຕາມຄຳເຫັນຂອງຜູ້ເຂົ້າຮ່ວມ ແລະ ຫົວໜ້າເຂົາເຈົ້າ ເຫັນໄດ້ຈະແຈ້ງວ່າໂຄງການ ToMT ນີ້ແມ່ນມີຄວາມເໝາະສົມ ທີ່ຈະພັດທະນາຄຸນນະພາບຂອງ ກສນ,

ຜູ້ ເຂົ້າຮ່ວມ 26 ທ່ານ ໃນຈຳນວນ 28 ທ່ານ ສົນໃຈເຮັດ ວຽກເປັນຄູຝຶກ




Members of ToMT in the Follow up Workshop for ToMT

ແລະ ສະແດງໃຫ້ເຫັນເຖິງການພັດທະນາຢ່າງທີ່ໝັ້ນຄົງຂອງຜູ້ເຂົ້າຮ່ວມໃນກິດຈະກຳການຝຶກອົບຮົມ ແລະ ການສອນຂອງເຂົາເຈົ້າ. ດັ່ງນັ້ນ, ຈຶ່ງສອດຄ່ອງກັບເປົ້າໝາຍຂອງຫ້ອງການ ດີວີວີ ອິນເຕີເນເຊິນແນວ ໃນການຝຶກອົບຮົມນັກການສຶກສາຜູ້ໃຫຍ່ ແລະ ການໃຫ້ຄວາມຮູ້ທີ່ປະສົມປະສານລະຫວ່າງຄວາມຊ່ຽວຊານໃນດ້ານວິທີການ ແລະ ແນວຄວາມຄິດການຮຽນຮູ້ຕະຫຼອດຊີວິດ.

> ຜູ້ເຂົ້າຮ່ວມ 6 ໃນ 9 ຂອງຜູ້ທີ່ເປັນຫົວໜ້າຜູ້ເຂົ້າຮ່ວມ ແນະນຳໃຫ້ພະນັກງານຂອງເຂົາເຈົ້າຈັດຝຶກອົບຮົມໄດ້ ແລະ ອີກ 3 ທ່ານແມ່ນແນະນຳໃຫ້ຝຶກອົບຮົມເພີ່ມຕື່ມ

ຢ່າງໃດກໍ່ຕາມ, ການວິໄຈນີ້ໄດ້ສະແດງຄຳແນະນຳຈຳນວນໜຶ່ງເຊິ່ງສອດຄ່ອງກັບຄວາມມຸ່ງມາດປາດຖະໜາຂອງຜູ້ເຂົ້າຮ່ວມ ແລະ ຫົວໜ້າຂອງພວກເຂົາເຊັ່ນ: ການຈັດຝຶກອົບຮົມທົບທວນ. ນອກຈາກນັ້ນ, ການວິໄຈຍັງຊີ້ໃຫ້ເຫັນເຖິງຄວາມຈຳເປັນທີ່ຈະຕ້ອງໃຫ້ຄູຝຶກຫຼັກທີ່ມີປະສົບການມີໂອກາດຫຼາຍຂຶ້ນໃນການຝຶກສອນໃນອະນາຄົດ ເພື່ອເຮັດໃຫ້ສຳເລັດພາລະກິດຂອງ ToMT.

ທັງໝົດນັ້ນເຫັນໄດ້ວ່າຜົນຂອງການວິໄຈແມ່ນເປັນໄປໃນທາງທີ່ດີ ແລະ ມັນໄດ້ເນັ້ນໜັກເຖິງຄວາມສຳເລັດຂອງການຝຶກອົບຮົມຄູຝຶກເພື່ອໄປເປັນຄູຝຶກຫຼັກໃນວຽກງານການສຶກສານອກໂຮງຮຽນໃນລາວ.



# ການຮຽນຮູ້ທາງອອນໄລໃນຫວຽດນາມໄດ້ຮັບການສົ່ງເສີມຍ້ອນການລະບາດຂອງໂຄິດ-19. ສິ່ງທີ່ຂາດຫາຍໄປ?

*Khau Huu Phuoc,* SEAMEO Regional Centre for Lifelong Learning



*ຜູ້ບໍລິຫານ
ວຽກງານການວິໄຈ
ແລະ ຝຶກອົບຮົມ*

## ໂລກໄຊເບີ

ເຊົ້າມື້ໜຶ່ງ ເມື່ອສາມປີກ່ອນ ຂ້າພະເຈົ້າກຳລັງນັ່ງຢູ່ໃນຮ້ານກາເຟ ກຳລັງດື່ມກາເຟອຸ່ນໆ ໄດ້ຍິນສຽງຫົວຫົວເບົາໆຈາກມຸມໜຶ່ງຂອງຫ້ອງ. ຄິດວ່າໜ້າຈະແມ່ນຊາວໜຸ່ມທີ່ກຳລັງມີເວລາທີ່ດີນຳກັນ, ຂ້າພະເຈົ້າແນມເຫັນຊາວໜຸ່ມສີ່ຄົນ, ຊາຍສອງ ຍິງສອງ ອາຍຸປະມານ 18 ປີ, ກຳລັງຈ້ອງເບິ່ງໜ້າຈໍໂທລະສັບມືຖືຢູ່ມິດໆ, ນິ້ວໂປ້ຂອງເຂົາເຈົ້າເລື່ອນປັດໜ້າຈໍໂທລະສັບຂຶ້ນ-ລົງ. ເຫດການນີ້ເປັນອີກດ້ານໜຶ່ງຂອງສິ່ງທີ່ຂ້າພະເຈົ້າຈິນຕະນາການໄວ້. ພວກເຂົາຖືກກືນຫາຍໄປຈາກໂລກແຫ່ງຄວາມຈິງ, ບໍ່ໄດ້ເຂົ້າສັງຄົມນຳກັນ ແລະ ຕັ້ງອົກຕັ້ງໃຈຢູ່ກັບສິ່ງທີ່ຄ້າຍຄືຄວາມຈິງຕໍ່ໜ້າ. ການສັງເກດພຽງບໍ່ເທົ່າໃດນາທີກໍເຫັນວ່າເຂົາເຈົ້ານັ້ນກຳລັງສື່ສານກັນ ໂດຍທີ່ບໍ່ໄດ້ຢູ່ໃນສະພາບແວດລ້ອມທາງກາຍະພາບ ແຕ່ຢູ່ໃນໂລກໄຊເບີ.

ອິນເຕີເນັດໄດ້ສ້າງໂລກທີ່ແນມບໍ່ເຫັນ, ເຊິ່ງຄົນຈຳນວນຫຼາຍໃຊ້ສະແດງຄວາມຄິດ, ອາລົມ ແລະ ສັງຄົມເພື່ອການເຮັດວຽກ, ເພື່ອຄວາມມ່ວນຊື່ນ, ສັງຄົມ ແລະ ການຮຽນຮູ້.

## ການຮຽນອອນໄລ

ການຮຽນຮູ້ຜ່ານເວັບໄຊເລີ່ມຂຶ້ນໃນປີ 1990, ແຕ່ E-Learning ມີຄຸນນະສົມບັດພິເສດໂຕ້ຕອບເຕັມຮູບແບບຂອງອິນເຕີເນັດ ໂດຍໃຊ້ປະໂຫຍດຈາກ Web 2.0 ເຊິ່ງມີປະສົບການມາແຕ່ປີ 2005 (Lehman & Conceicao 2010). ນັບແຕ່ນັ້ນມາກໍໄດ້ມີການເປີດຫຼັກສູດອອນໄລໂດຍມະຫາວິະຍາໄລ ແລະ ສະຖາບັນການສຶກສາຫຼາຍແຫ່ງໃນໂລກ, ໄດ້ຕອບສະໜອງຄວາມຕ້ອງການດ້ານການຮຽນຮູ້ຂອງຄົນເປັນລ້ານ ລວມທັງຊາວໜຸ່ມ ແລະ ຜູ້ໃຫຍ່, ເພດຍິງ-ຊາຍ, ຜູ້ທີ່ເຮັດວຽກ ແລະ ຜູ້ທີ່ກຳລັງຊອກວຽກ. ແນວໂນ້ມຂອງການຮຽນ ແລະ ການສອນອອນໄລນັ້ນເຫັນໄດ້ຊັດເຈນແຕ່ຍັງບໍ່ສາມາດແທນທີ່ການຮຽນ-ການສອນແບບເດີມໄດ້.

ການລະບາດໃຫຍ່ຂອງ ໂຄວິດ-19 ໄດ້ກະຕຸ້ນໃຫ້ເກີດບົດຮຽນອອນໄລຂຶ້ນຫຼາຍ ເຊິ່ງປ່ຽນຈາກການສິ່ງເນື້ອໃນບົດຮຽນແບບເກົ່າໄປເປັນການສາຍຮູບພາບທາງອິນເຕີເນັດ. ຍິ່ງໄປກວ່ານັ້ນ, ຄຳແນະນຳອອນໄລເບິ່ງຄືວ່າຈະເປັນທາງເລືອກດຽວຂອງການສຶກສາໃນສະຖານທີ່ ແລະ ປະເທດທີ່ກຳລັງລະບາດ, ປະຊາຊົນຖືກກັກບໍລິເວນ ແລະ ສະຖາບັນການສຶກສາຖືກປິດຊົ່ວຄາວ. ຈຳນວນຜູ້ຕິດເຊື້ອ ແລະ ບັນດາປະເທດຕ່າງໆລວມທັງຫວຽດນາມເພີ່ມຂຶ້ນໃນແຕ່ລະມື້ ຈົນມີຈຳນວນ 209 ຄົນ ໃນວັນທີ 7 ເມສາ 2020.

ສະຖານະການແຜ່ລະບາດຢູ່ໃນຫວຽດນາມເບິ່ງຄືວ່າຈະຊີ້ໃຫ້ເຫັນຜົນປະໂຫຍດທີ່ຫຼາກຫຼາຍຂອງການຮຽນອອນໄລ: ປະຢັດເວລາໃນການເດີນທາງ ລະຫວ່າງເຮືອນ ແລະ ສະຖານທີ່ຮຽນ, ຫຼຸດຜ່ອນການໃຊ້ນ້ຳມັນ, ເພີ່ມຄວາມໝັ້ນໃຈໃຫ້ຜູ້ຮຽນເນື່ອງຈາກບໍ່ມີການກວດກາຈຳນວນພົນ. ເຖິງຢ່າງໃດກໍຕາມ, ຮູບແບບການຮຽນຮູ້ນີ້ກໍມີຂໍ້ບົກພ່ອງສອງປະການຄື: ການມີສ່ວນຮ່ວມຂອງຜູ້ຮຽນຢູ່ໃລະດັບຕ່ຳ ແລະ ຜູ້ຮຽນມີຄວາມຮູ້ສຶກໂດດດ່ຽວ ຫຼື ເວົ້າອີກຢ່າງໜຶ່ງແມ່ນບໍ່ໄດ້ຢູ່ໃນສະພາບແວດລ້ອມການຮຽນຮູ້. ດ້ວຍເຫດນີ້, ມັນຈຶ່ງບໍ່ແມ່ນເລື່ອງແປກທີ່ນັກຮຽນຈະເຂົ້າຫ້ອງຮຽນ ແລະ ນັ່ງຮຽນໃນຂະນະທີ່ຄູກຳລັງສອນຢູ່ ຫຼື ວິດີໂອກຳລັງສາຍຢູ່, ບາງຄັ້ງກໍເຮັດແນວອື່ນໄປພ້ອມ. ໃນລະຍະສັ້ນພວກເຂົາບໍ່ໄດ້ມີສ່ວນຮ່ວມໃນຂະບວນການຮຽນຮູ້ຢ່າແທ້ຈິງ.

## ຄວາມຮູ້ສຶກຂອງການເຂົ້າຮ່ວມ

Lehman ເບິ່ງຢ່າງຖືກຕ້ອງວ່າຄວາມຮູ້ສຶກຂອງການເຂົ້າຮ່ວມໃນການຮຽນອນໄລແມ່ນມີຄວາມສຳຄັນ ແລະ ມັນມີຫຼາຍຢ່າງກ່ຽວຂ້ອງກັບຜົນຂອງການຮຽນຮູ້ຕົວຈິງ. ອີງຕາມ Lehman ກ່າວໄວ້ວ່າການສະແດງຕົວຕົນທາງອອນໄລມີສອງດ້ານທີ່ຈຳເປັນສຳລັບແຕ່ລະຄົນ ເພື່ອສາມາດຂ້າມຜ່ານຂີດຈຳກັດຂອງຫ້ອງຮຽນທີ່ເໝືອນຈິງ: ການຖ່າຍທອດສິດເຊິ່ງເປັນຄວາມຮູ້ສຶກຄ້າຍຄືການຢູ່ໃນ "ສະຖານທີ່ນັ້ນ" ໃນບໍລິບົດຂອງຫ້ອງຮຽນ ແລະ ການສະແດງຕົນໃນສັງຄົມເຊິ່ງເປັນຄວາມຮູ້ສຶກຂອງການ "ຢູ່ຮ່ວມກັບຄົນອື່ນ".

ມະນຸດເປັນສັດສັງຄົມ ແລະ ຕ້ອງການການສະໜັບສະໜູນທາງສັງຄົມ (OECD Better Life Index, Lents 2018). ໃນທາງຊີວະວິທະຍາພວກເຂົາໄດ້ພັດທະນາເພື່ອການເຮັດວຽກຮ່ວມກັນ, ກິນ ແລະ ດຳລົງຊີວິດຮ່ວມກັນໃນຊຸມຊົນ ແລະ ຂະບວນການດັ່ງກ່າວແມ່ນເພື່ອຮຽນຮູ້ເຊິ່ງກັນ ແລະ ກັນ. ການຮຽນຮູ້ໃນສະໄໝບູຮານໄດ້ດຳເນີນໄປຢ່າງເປັນທຳມະຊາດ ແລະ ງ່າຍດາຍໂດຍຜ່ານໄວໜຸ່ມຫຼິ້ນກັບຜູ້ສູງອາຍຸຂອງເຂົາເຈົ້າ, ເບິ່ງການປະຕິບັດໜ້າທີ່ຂອງຜູ້ອາວຸດໂສ ແລະ ຮຽນແບບຈາກຜູ້ອາວຸດໂສ. ໃນຂະນະທີ່ທັກສະອາດຝຶກຝົນໄດ້ບໍ່ຫຼາຍກໍໜ້ອຍ, ສິ່ງທີ່ພວກຮົາເອີ້ນວ່າພູມປັນຍາ, ສະສົມ ແລະ ເຕີບໂຕມາຫຼາຍອາຍຸຄົນຈົນເຖິງການຮຽນແບບງ່າຍໆຄົງຈະບໍ່ພຽງພໍ, ແລະ ອາຈານສອນ ຫຼື ຄູ ແມ່ນຂຶ້ນຢູ່ກັບວ່າເຮົາສາມາດຖ່າຍທອດຄວາມຮູ້ນັ້ນແນວໃດ, ກາຍເປັນຜູ້ຮັບຜິດຊອບໃນການຖ່າຍທອດຜ່ານສື່ພາສາ ແລະ ການຈັດ



ລະບົບພູມປັນຍາ (Dewey 1916). ບໍ່ວ່າການຮຽນຮູ້ ແລະ ການສຶກສາຈະເກີດຂຶ້ນໃນຮູບແບບໃດ ຈຸປະສົງຫຼັກຂອງມັນກໍຄືການກຽມຄວາມພ້ອມໃຫ້ຊາວໜຸ່ມໃນການເຂົ້າສັງຄົມ ໃນອະນາຄົດຢ່າງມີຄວາມໝາຍ.

ການຮຽນຮູ້ແມ່ນກິດຈະກຳທາງສັງຄົມ. ຜູ້ຮຽນໄດ້ມາເຕົ້າໂຮມກັນ, ໄດ້ຮັບຄຳແນະນຳ ສິດສອນຈາກຄູອາຈານ, ສົນທະນາກັນ, ໄດ້ຄວາມຮູ້ໃໝ່ ແລະ ນຳໃຊ້ຄວາມຮູ້. ອິນເຕີເນັດໄດ້ສ້າງຊຸມຊົນຄ້າຍຄືຄວາມຈິງທີ່ເຮັດໃຫ້ນັກຮຽນຮູ້ສຶກຜູກພັນກັບສັງຄົມທີ່ກ່ຽວກັບກິດຈະກຳນັ້ນຫຼືບໍ່? ແນ່ນອນວ່າມັນແມ່ນປະສົບການຂອງກຸ່ມໄວໜຸ່ມທີ່ຂ້າພະເຈົ້າໄດ້ກ່າວເຖິງກ່ອນໜ້ານີ້. ພວກເຂົາຍັງຢູ່ໃນໂລກໄຊເບີ: ພວກເຂົາຫິວຂວັນເວລາທີ່ໂພສຄວາມຄິດເຫັນ ແລະ ຕອບກັບຂໍ້ຄວາມເຊິ່ງກັນ ແລະ ກັນ ເບິ່ງຄືວ່າລືມໂລກຄວາມເປັນຈິງ. ສະພາບແວດລ້ອມການຮຽນຮູ້ອອນໄລໄດ້ໃຊ້ວິທີນີ້ເພື່ອໃຫ້ຄວາມຮູ້ສຶກ "ຢູ່ທີ່ນັ້ນ" ແລະ "ຢູ່ຮ່ວມກັນ" ເຊິ່ງເຮັດໃຫ້ເຕັກໂນໂລຊີອິນເຕີເນັດ ທີ່ໃຊ້ຢູ່ (ຄອມພິວເຕີ, ໂທລະສັບມືຖື, ກ້ອງຖ່າຍຮູບ) ເບິ່ງຄືໂປ່ງໃສ ເຊິ່ງຊ່ວຍໃຫ້ຜູ້ຮຽນຮູ້ສຶກວ່າພວກເຂົາຢູ່ໃນສະຖານທີ່ອື່ນ ແລະ ຢູ່ໃນບໍລິບົດທີ່ມີເພື່ອນຮ່ວມຫ້ອງຮຽນ ແລະ ຄູກຳລັງສອນ? ຄຳຕອບແມ່ນບໍ່ແນ່ນອນ. ຕາບໃດທີ່ຜູ້ຮຽນຍັງຮູ້ສຶກວ່ານັ່ງຢູ່ຄົນດຽວໃນສະຖານທີ່ຂອງຕົນເອງ, ການຈັດອຸປະກອນການສື່ສານໂດຍການແຕະປຸ່ມ, ຍ້າຍເມົ້າຄອມພິວເຕີອ້ອມຮອບ ແລະ ກົດ, ຄວາມສົນໃຈຂອງການຢູ່ກັບສິ່ງອື່ນການຮຽນຮູ້ແມ່ນບໍ່ເກີດຂຶ້ນ. ພວກເຂົາຮູ້ສຶກຄືຖືກບັງຄັບໃຫ້ໄປຮຽນອອນໄລ ເພື່ອປະຕິບັດຕາມໜ້າທີ່ຂອງຜູ້ຮຽນ ເພື່ອບັນລຸເປົ້າໝາຍສຸດທ້າຍຄືການຮຽນຈົບ.

Ally (2008, ເວົ້າໃນ Hartnett 2016) ໃຫ້ຄຳຈຳກັດຄວາມຂອງການສຶກສາອອນໄລ "ການໃຊ້ອິນເຕີເນັດເພື່ອເຂົ້າເຖິງສື່ຕ່າງໆ, ເພື່ອໂຕ້ຕອບເນື້ອໃນກັບຜູ້ສອນ ແລະ ຜູ້ຮຽນດ້ວຍກັນ; ແລະ ເພື່ອຂໍແຮງສະໜັບສະໜູນໃນລະຫວ່າງຂະບວນການຮຽນຮູ້, ເພື່ອທີ່ຈະໄດ້ຮັບຄວາມຮູ້, ເພື່ອສ້າງຄວາມໝາຍສ່ວນຕົວ ແລະ ເຕີບໂຕຈາກປະສົບການການຮຽນຮູ້". ອົງປະກອບໃດໜຶ່ງຂອງການປະຕິສຳພັນມະນຸດຈະສູນເສຍໄປເນື່ອງມາຈາກໂຄງສ້າງຂອງຫຼັກສູດທີ່ບໍ່ເໝາະສົມ, ສະພາບແວດລ້ອມການຮຽນຮູ້ການເປັນສະຖານທີ່ ທີ່ຢູ່ໃນໃຈຂອງຜູ້ຮຽນ ທີ່ຖືກປ່ອຍໄວ້ໂດຍບໍ່ມີແຮງຈູງໃຈທີ່ດີ ສຳລັບການມີສ່ວນຮ່ວມໃນການອອກແບບເນື້ອໃນທີ່ສະແດງໃນອຸປະກອນເອເລັກໂຕຣນິກ.

## ຄຸນລັກສະນະທີ່ຂາດຫາຍໄປຂອງການຮຽນອອນໄລ

ຜົນກະທົບຈາກການລະບາດ ໂຄວິດ-19 ການຮຽນ-ການສອນແບບໜ້າຕໍ່ໜ້າຈຶ່ງຖືກຢຸດຊົ່ວຄາວ. ສະຖາບັນການສຶກສາທົ່ວຫວຽດນາມໄດ້ນຳໃຊ້ອິນເຕີເນັດເປັນຕົວແບບການສອນທີ່ມີການນຳສະເໜີຜ່ານວິດີໂອ, ການຖ່າຍທອດສົດເພື່ອການຮຽນ-ການສອນໃຫ້ທັນກັບສະພາບການ ແລະ ນຳໃຊ້ເຄືອຂ່າຍສັງຄົມອອນໄລເປັນບ່ອນແລກປ່ຽນສົນທະນາ. ສຳລັບນັກຮຽນບາງຄົນໂດຍສະເພາະແມ່ນຜູ້ທີ່ຢູ່ໃນເຂດຊົນນະບົດ ແລະ ເຂດພູດອຍ ນີ້ກໍເປັນອຸປະສັກສຳລັບເຂົາເຈົ້າ ຍ້ອນວ່າມັນໄດ້ປ່ຽນຈາກຫ້ອງຮຽນແບບຝາຊີມັງ ໄປເປັນຫ້ອງຮຽນຄ້າຍຄືຈິງເຊິ່ງມັນແມ່ນປະສົບການໃໝ່ທັງໝົດ.

ສື່ມວນຊົນໃນປະເທດຫວຽດນາມເລີ່ມພິຈາລະນາ ແລະ ປະເມີນເບື້ອງຕົ້ນກ່ຽວກັບການຈັດຕັ້ງປະຕິບັດການຮຽນ-ການສອນແບບອອນໄລ. ຄວາມຄິດເຫັນໃນຂະນະທີ່ສະແດງມຸມມອງໃນທາງບວກຂອງທິດທາງໃໝ່ກ່ຽວກັບການປະຢັດເວລາເດີນທາງລະຫວ່າງເຮືອນ ແລະ ສະຖານທີ່ຮຽນ ແລະ ຄວາມຄິດທີ່ວ່າການຮຽນຮູ້ອອນໄລແມ່ນວິທີທີ່ດີທີ່ສຸດທີ່ຈະສວຍໃຊ້ເວລາໃນໄລຍະປິດໂຮງຮຽນບໍ່ໃຫ້ເສຍໄປລ້າໆ ເຊິ່ງຈະມີອຸປະສັກຢູ່ສອງຢ່າງຄື: ຂາດໂຄງສ້າງພື້ນຖານທີ່ເໝາະສົມໃນເຂດຫ່າງໄກສອກຫຼີກ ແລະ ເຂດພູດອຍ ເຊິ່ງເຮັດໃຫ້ຮູບແບບການຮຽນ-ການສອນເທົ່າກັບວ່າເປັນໄປບໍ່ໄດ້ ແລະການມີສ່ວນຮ່ວມຂອງນັກຮຽນແມ່ນຕໍ່າ ຈາກສ່ວນໜຶ່ງຂອງນັກຮຽນ ເຊິ່ງຜົນມາຈາກຄວາມຮູ້ສຶກວ່າພວກເຂົາຖືກແຍກອອກມາຈາກຫ້ອງຮຽນແບບທົ່ວໄປ, ດັ່ງນັ້ນ ເຂົາຈຶ່ງຂາດຄວນຮູ້ສຶກຂອງການຮ່ວມມື ແລະ ການແຂ່ງຂັນ ແລະ ຄວາມລຳບາກຂອງຄູ ແລະ ນັກຮຽນ ແລະ ມີການປະຕິສຳພັນກັນລະຫວ່າງນັກຮຽນແມ່ນມີຕໍ່າ.

ຄູສອນຫຼາຍຄົນຫັນປ່ຽນມາໃຊ້ສື່ສັງຄົມອອນໄລໃນການສິດບົດຮຽນ ແຕ່ກໍຍັງຂາດສິ່ງທີ່ຈຳເປັນສຳລັບການຮຽນ-ການສອນອອນໄລ. ບົດຮຽນບໍ່ແມ່ນແຕ່ການຖ່າຍທອດຄວາມຮູ້ໄປຫາຜູ້ຮຽນພຽງທາງດຽວ. ມັນບໍ່ແມ່ນແຕ່ການເຮັດບົດຝຶກຫັດໃຫ້ແລ້ວ. ໃນກໍລະນີທີ່ບໍ່ມີການພົວພັນຂອງມະນຸດໂດຍກົງໃນສັງຄົມຂະໜາດນ້ອຍໃນຫ້ອງຮຽນ, ບົດຮຽນອອນໄລເຮັດຈະຕ້ອງໄດ້ມີກິດຈະກຳຫຼາຍຂຶ້ນເພື່ອໃຫ້ທຸກຄົນໄດ້ມີ ສ່ວນຮ່ວມໃນລະດັບດຽວກັນໃນຊັ້ນຮຽນປົກກະຕິ.

ໃນໄລຍະສັ້ນ, ໃນຂະນະທີ່ສິ່ງກີດຂວາງທຳອິດແມ່ນໜຶ່ງໃນເຕັກໂນໂລຊີ ແຕ່ສິ່ງທີສອງຄືດ້ານວິທີການ ແລະ ຄວາມສາມາດຂອງຄູທີ່ມີຄວາມຮູ້ໃນການບໍລິຫານຄຸ້ມຄອງ.

## ສິ່ງທີ່ສາມາດເຮັດໄດ້

ໂຄງສ້າງພື້ນຖານທາງເຕັກໂນໂລຊີ ແລະ ດິຈິຕ໋ອລແຕກຕ່າງກັນ, ຄວາມຮູ້ສຶກ "ຢູ່ທີ່ນັ້ນ" ໃນຫ້ອງຮຽນທາງກາຍະພາບສາມາດສ້າງຂຶ້ນໄດ້ໂດຍການສ້າງສະພາບແວດລ້ອມໃຫ້ໃກ້ຄຽງກັບທຳມະຊາດໄດ້. Lehman ແນະນຳຫຼາຍກິດຈະກຳທີ່ຈະຊ່ວຍໃຫ້ຄູ-ນັກຮຽນສາມາດພົວພັນກັນໄດ້. ສິ່ງເຫຼົ່ານີ້ລວມມີການມອບໝາຍໜ້າທີ່ໃຫ້ແຕ່ລະຄົນໃນທີມ, ຮຽກຮ້ອງໃຫ້ນັກຮຽນແຕ່ລະຄົນປະກອບສ່ວນໃນລະຫວ່າງການສອນ, ການປະຊຸມອອນໄລ, ວຽກບ້ານໃນຮູບແບບໂຄງການ, ການໂຕ້ວາທີ, ການສົນທະນາກຸ່ມ, ການບັນລະຍາຍຂະໜາດນ້ອຍ, ການນຳສະເໜີ, ວີດີໂອສັ້ນ, ການເຊື່ອມຕໍ່ ຫຼື ການປະຊຸມຜ່ານວີດີໂອ, ເຊີນແຂກຊ່ຽວຊານ, ການສົນທະນາ, ການສາທິດວັດຖຸ ຫຼື ຮູບພາບ, ແຜນຜັງການເຮັດວຽກຮ່ວມກັນ, ວີດີໂອຂອງຜູ້ເຂົ້າຮ່ວມ, ການເຮັດວຽກທີ່ຄ້າຍຄືໃນຫ້ອງທົດລອງ, ການມີສ່ວນຮ່ວມໃນບົດຄວາມ, ການສຳພາດ ແລະ ວີດີໂອແນະນຳ. ໃນຂະນະທີ່ຢູ່ຫ້ອງຮຽນອອນໄລ ເມື່ອເປີດກ້ອງວີດີໂອ (webcams) ຄວນຈະໃຊ້ປະສົບການໃນຊີວິດຈິງໃຫ້ຜູ້ຮຽນສາມາດເຫັນກັນໄດ້ໃນຂະນະທີ່ແລກປ່ຽນຄວາມຄິດເຫັນ ແລະ ບາງຄັ້ງກໍມີຄວາມມ່ວນຊື່ນຄືກັບໃນຫ້ອງຮຽນປົກກະຕິ.

ກະຊວງສຶກສາທິການ ແລະ ການຝຶກອົບຮົມຂອງຫວຽດນາມ ຮ່ວມກັບກະຊວງຂໍ້ມູນ ແລະ ການສື່ສານກຳລັງສ້າງແຜນງານຮ່ວມກັນ ສຳລັບສະຖາບັນການສຶກສາທົ່ວປະເທດໃນການສ້າງຕັ້ງ ແລະ ສະໜອງຫຼັກສູກ (Tuoi Tre 2020). ແຜນງານນີ້ຈະມີຕົວເສີມສຳລັບການສື່ສານຫຼາຍຢ່າງ. ຫຼາຍບໍລິສັດເອກະຊົນໄດ້ສະເໜີແຜນງານທີ່ຄ້າຍກັນໃນລາຄາທີ່ຖືກ. ອີງຕາມໜັງສືແຈ້ງການຂອງລັດຖະມົນຕີ ເລກທີ 10/2017/TT-BGDDT (MOET 2017) ກ່ຽວກັບລະບຽບການຂອງການສຶກສາຊັ້ນສູງທາງໄກ ແລະ ໜັງສືແຈ້ງການຍັງບໍ່ໄດ້ປະກາດກ່ຽວກັບການປະສົມປະສານແບບບັງຄັບຂອງການຮຽນ-ການສອນອອນໄລໃນຫຼັກສູດການສຶກສາສາມັນ, ຄວບຄູ່ໄປກັບຄວາມພ້ອມຂອງໂຄງສ້າງພື້ນຖານທີ່ໄດ້ຖືກຮັບປະກັນຈາກຜູ້ໃຫ້ບໍລິການອິນເຕີເນັດ ແລະ ແຜນງານຈະຖືກນຳໃຊ້ໃນມໍ່ໆ ນີ້, ສ່ວນຫຼາຍແມ່ນຈະຢູ່ໃນໂຮງຮຽນ ແລະ ຄູ ເພື່ອຄວາມຍືນຍົງ ແລະ ປະສິດທິພາບຂອງຫຼັກສູດອອນໄລ.

*References*

Dewey, J. (1916). Democracy and Education. E-version published in Eletronics Classics Series by Pennsylvania State University in 2001.

Harnett, M. (2016). Motivation in Online Education. (e-book). Springer

Lehman, R.M. & Conceicao, S.C.O. (2010). Creating a Sense of Presence in Online Teaching. US: Jossey-Bass

Lents, N.H. (2018). "In Humans and Animals, Social Learning Drives Intelligence". Psychology Today. Available at: https://www.psychologytoday.com/intl/blog/beastly-behavior/201803/in-humans-and-animals-social-learning-drives-intelligence

MOET (Ministry of Education and Training of Vietnam). (2017). Circular 10/2017/TT-BGD□T. Regulations on Distance Education at Higher Education Level.

OECD Better Life Index. Available at: http://www.oecdbetterlifeindex.org/topics/community/

Tuoi Tre. (2020). "T"m gi□i ph□p h□ tr□ mi□n ph' c™ng ngh□ th™ng tin cho d□y h□c online" [In search of a free ICT platform form online teaching and learning]. Newspaper. Available at: https://tuoitre.vn/tim-giai-phap-ho-tro-mien-phi-cong-nghe-thong-tin-cho-day-hoc-online-2020032410290404.htm



# ເຄິ່ງປີທຳອິດຂອງຂ້າພະເຈົ້າໃນເຢຍລະມັນ

*ປາກູລີ ໄຊຍະຊາງ*



ອະດີດຜູ້ຊ່ວຍ
ຜູ້ບໍລິຫານໂຄງການ

*ປາກູລີ ໄຊຍະຊາງ ເຄີຍເຮັດວຽກເປັນຜູ້ຊ່ວຍໂຄງການຂອງຫ້ອງການດີວີວີ ອິນເຕີເນເຊິນແນວ ປະຈຳພາກພື້ນທີ່ນະຄອນຫຼວງວຽງຈັນເປັນເວລາ ໜຶ່ງ ປີເຄິ່ງ, ປະຈຸບັນນາງຢູ່ປະເທດເຢຍລະມັນເຮັດວຽກຢູ່ສູນການສຶກສາຜູ້ໃຫຍ່ (Volkshochschule) ໃນປະເທດເຢຍລະມັນ ແລະ ຮຽນຮູ້ພາສາເຢຍລະມັນ ລະບົບການສຶກສາຜູ້ໃຫຍ່.*

ໄດ້ສຳຜັດກັບທີມະ ແລະ ປະສົບການໃນຕ່າງປະເທດເປັນຄວາມຝັນຂອງຂ້ອຍ ເພາະມັນມີຫຼາຍສິ່ງໃຫ້ເຫັນ ແລະ ຮຽນຮູ້. ຂ້ອຍຕັດສິນໃຈໃຊ້ໂອກາດເພື່ອມາທີ່ນີ້ ເພື່ອພັດທະນາຕົນເອງ ນັ້ນແມ່ນເຫດຜົນທີ່ຂ້ອຍຕ້ອງໄດ້ຈາກລາລູກສາວທີ່ໜ້າຮັກ ແລະ ຄອບຄົວຂອງຂ້ອຍ.

ໃນໄລຍະທຳອິດມັນກໍຫຍຸ້ງຍາກສຳລັບຂ້ອຍ ເພາະຂ້ອຍຄິດຮອດບ້ານ ແລະ ທຸກຢ່າງກໍໃໝ່ສຳລັບຂ້ອຍ ບໍ່ວ່າຈະແມ່ນຄົນ, ວັດທະນະທຳ, ພາສາ, ອາຫານ ແລະ ສະພາບແວດລ້ອມ ແລະ ລວມທັງລະບົບລົດປະຈຳທາງ ແລະ ລົດໄຟແມ່ນສິ່ງໃໝ່ສຳລັບຂ້ອຍ ມັນດີຫຼາຍ ແລະ ມາຕາມເວລາ. ການມາດຳລົງຊີວິດ ແລະ ຮຽນພາສາເຢຍລະມັນແມ່ນສິ່ງທີ່ຍາກທີ່ສຸດສຳລັບຂ້ອຍ ແຕ່ປະຈຸບັນກໍເລີ່ມດີຂຶ້ນແລ້ວ ໃນຂະນະດຽວກັນຂ້ອຍກໍມີຄວາມສຸກ ແລະ ມ່ວນຊື່ນໃນສະພາບແວດລ້ອມບ່ອນເຮັດວຽກໃໝ່ ໄດ້ຮຽນສິ່ງໃໝ່, ອອກໄປທ່ຽວໃນສະຖານທີ່ໃໝ່ກັບເພື່ອນໃໝ່ ແລະ ມ່ວນຊື່ນໃນທຸກລະດູການ.

ນັກຮຽນຝຶກຫັດເຮັດວຽກ, ຂ້ອຍກຳລັງຮັດສິ່ງໃໝ່ໆ ກັບເພື່ອນຮ່ວມງານໃໝ່ ແລະ ລະບົບການເຮັດວຽກທີ່ແຕກຕ່າງກັນ, ມັນເຮັດໃຫ້ຂ້ອຍມີຄວາມເຂົ້າໃຈກ່ຽວກັບການເຮັດວຽກ ແລະ ສົນທະນາກັບຄົນອື່ນໆ. ໃນແຕ່ລະວັນພວກເຮົາໄດ້ຈັດສຳມະນາສຳລັບ 55 - 60 ຄົນ.ເຊິ່ງຈະມີສອງກຸ່ມຄືກຸ່ມມື້ປົກກະຕິ ແລະ ກຸ່ມສຳລັບວັນເສົາ-ອາທິດ ແຕ່ລະກຸ່ມຈະມີການຂຶ້ນຫ້ອງຮຽນ ປະມານ 2 - 6 ຄັ້ງ ໃນຫົວຂໍ້ທີ່ແຕກຕ່າງກັນເຊັ່ນ: ພາສາ, ທັກສະການສື່ສານ, ທັກສະການບໍລິຫານ ແລະ ນະໂຍບາຍ, ການນັ່ງສະມາທິ, ການປູກຝັງ, ໂຍຄະ ແລະ ອື່ນໆ.

ໃນເດືອນຜ່ານມາຂ້ອຍມີເວລາໜຶ່ງອາທິດໄປຢ້ຽມຢາມໂຄງ-ການ MONA LEA (ການຝຶກອົບຮົມວິຊາຊີບສຳລັບແມ່ຍິງຕ່າງປະເທດ ຜູ້ທີ່ເຂົ້າມາຢູ່ໃນປະເທດເຢຍລະມັນ ແລະ ຕ້ອງການເຮັດວຽກ ຫຼື ຕ້ອງການເງິນເພື່ອໃຊ້ຈ່າຍໃນຄອບຄົວ). ໂຄງການນີ້ໜ້າສົນໃຈຫຼາຍສຳລັບຂ້ອຍ ຍ້ອນວ່າຜູ້ເຂົ້າຮ່ວມທຸກຄົນມີພື້ນຖານ ແລະ ການສຶກສາທີ່ແຕກຕ່າງກັນ ແຕ່ 70% ຂອງຜູ້ເຂົ້າຮ່ວມແມ່ນສາມາດຊອກວຽກເຮັດໄດ້ ແລະ ໂຄງການນີ້ມີຄວາມຄ້າຍຄືກັບຢູ່ລາວໃນແງ່ງົບປະມານ ແລະຈຸດປະສົງຂອງຜູ້ເຂົ້າຮ່ວມ ຂ້ອຍຈະເດີນທາງໄປຫ້ອງການຫຼັກຂອງ ດີວີວີ ໃນເມືອງ ບອນ (Bonn) ເປັນເວລາສອງອາທິດ ໃນວັນທີ 13 - 26 ມີນາ ແລະ ຈະໄປຢາມມະຫາວິທະຍາໄລໂຄໂລນ (Cologne University) ໃນວັນທີ 20 ມີນາ. ຂ້ອຍຫວັງວ່າການໄປຢ້ຽມຢາມຄັ້ງນີ້ຈະເປັນທີ່ການດີ ແລະ ຈະໄດ້ເຫັນຫ້ອງການຫຼັກມີໜ້າຕາແນວໃດ.





Right: PaKou with her colleagues in *Adult Education Centre (Münchner Volkshochschule)* Left: A place around where Pakou stay in Munich

# ມູມມອງກ່ຽວກັບສູນການຮຽນຮູ້ຊຸມຊົນເຄື່ອນທີ່ ສໍາລັບຊຸມຊົນກາເວັດ ໃນແຂວງຣັດຕະນະຄີຣີ

*ສໍາພາດໂດຍ Sophia Martell*, ດີວີວີ ອິນເຕີເນເຊິນແນວ ກໍາປູເຈຍ

*ນັບແຕ່ປີ 2019 ມີສູນການຮຽນຮູ້ຊຸມຊົນເຄື່ອນທີ່ສາມແຫ່ງຢູ່ບ້ານໂຄກຫຼັກ (Kok Lak) ແລະ ບ້ານເວີນໄຊ (Veun Sai) ໃນແຂວງຣັດຕະນະຄີຣີ ໄດ້ຖືກສ້າງຕັ້ງຂຶ້ນ. ຢູ່ໃນເຂດຫ່າງໄກສອກຫຼີກ 99% ຂອງຈໍານວນປະຊາກອນແມ່ນ ເປັນຊົນເຜົ່າກຸ່ມນ້ອຍ ແລະ ເປັນກຸ່ມຄົນດ້ອຍໂອກາດ. ສະນັ້ນ ດີວີວີ ອິນເຕີເນເຊິນແນວ ແລະ ອົງການຄູ່ຮ່ວມງານ NTFP ໄດ້ຮ່ວມມືກັນເພື່ອປັບປຸງການເຂົ້າເຖິງການສຶກສາຂັ້ນພື້ນຖານ ແລະ ການຮຽນຮູ້ຕະຫຼອດຊີວິດສໍາລັບທຸກຄົນ. ໃນຂະນະທີ່ໄປຢ້ຽມຢາມສະຖານທີ່ໜຶ່ງຂອງສູນການຮຽນຮູ້ຊຸມຊົນເຄື່ອນທີ່, ດີວີວີ ອິນເຕີເນເຊິນແນວ ໄດ້ມີໂອກາດສໍາພາດຄູອາສາສະໝັກ Mr. S ເຊິ່ງເປັນສະມາຊິກຂອງຄະນະກໍາມະການຂອງສູນການຮຽນຮູ້ຊຸມຊົນເຄື່ອນທີ່ ແລະ ຍັງເປັນຜູ້ປະສານງານຂອງທ່ານ Vansak ພະນັກງານໂຄງການ NTFP.*

### *Mr. S. ຊ່ວຍເລົ່າໃຫ້ຟັງແນ່ວ່າເດັກນ້ອຍ ແລະ ຊາວໜຸ່ມ Kavet ດ້ອຍໂອກາດແນວໃດ?*

ຊົນເຜົ່າ Kavet ຕ້ອງມີຄວາມສາມາດທີ່ຕິດຕໍ່ສື່ສານກັບສັງຄົມຄົນກໍາປູເຈຍນໍາກັນໄດ້ ແຕ່ເຂົາເຈົ້າຍັງບໍ່ທັນໄດ້ພາສາກໍາປູເຈຍ. ດັ່ງນັ້ນ ມັນຈຶ່ງຍາກສໍາລັບພວກເຮົາທີ່ຈະສື່ສານ ແລະ ບາງຄົນກໍມີຄວາມກັງວົນວ່າຈະໃຊ້ປະໂຫຍດຈາກກໍາລັງແຮງງານຂອງພວກເຂົາແນວໃດ ແລະ ອາຫານ ແລະ ການຮັກສາສຸຂະອະນາໄມແມ່ນຍັງບໍ່ພຽງພໍສໍາລັບເຂົາເຈົ້າ ເຊິ່ງນີ້ຈະນໍາໄປສູ່ບັນຫາສຸຂະພາບ. ຊຸມຊົນ Kavet ແມ່ນຍັງຂາດບາງພື້ນຖານຂອງວິທີການຫາລ້ຽງຊີບຂັ້ນຕໍ່າ.

ທ່ານ Vansak ເສີມຕື່ມ ນອກຈາກນີ້ ມັນເປັນເຂດຫ່າງໄກສອກຫຼີກຫຼາຍ ແລະ ພື້ນຖານໂຄງລ່າງກໍບໍ່ດີ ສະນັ້ນ ເປັນການຍາກທີ່ສຸດທີ່ຈະເຂົ້າເຖິງຊຸມຊົນ ຖ້າທຽບໃສ່ຊຸມຊົນ ອື່ນໆ ການສຶກສາຊັ້ນສູງແມ່ນສາມາດເຂົ້າເຖິງໄດ້ຍາກຫຼາຍ.

### *ພວກເຂົາຈະໄດ້ຜົນປະໂຫຍດຫຍັງແນ່ຈາກກິດຈໍາກໍາສູນການຮຽນຮູ້ຊຸມຊົນເຄື່ອນທີ່?*

ກ່ອນອື່ນໝົດ, ພວກເຂົາໄດ້ຂົ້າເຖິງການສຶກສາ ແລະ ໂອກາດທີ່ຈະຮຽນພາສາຂະເໝນ ໃນຫ້ອງຮຽນສອງພາສາ. ແຕ່ຕໍ່ມາພວກເຂົາກໍຍັງສາມາດຮຽນຮູ້ກ່ຽວກັບການຮັກສາສຸຂະອະນາໄມ, ການຮັກສາສຸຂະພາບ ແລະ ທັກສະໃນການເຮັດກະສິກໍາ ເພື່ອທີ່ຈະສາມາດປູກຜັກເອງໄດ້ ເພື່ອທີ່ຈະບໍ່ຕ້ອງໄດ້ໃຊ້ຈ່າຍໃນການອອກຕະຫຼາດ. ຜົນປະໂຫຍດສໍາລັບຊຸມຊົນແມ່ນຜູ້ເຂົ້າຮ່ວມໄດ້ແລກປ່ຽນຄວາມຮູ້ ແລະ ປະສົບການກັບສະມາຊິກໃນຊຸມຊົນ.

### *ທ່ານ Vansak ແມ່ນຫຍັງຄືແນວຄວາມຄິດຫຼັກຂອງສູນການຮຽນຮູ້ຊຸມຊົນເຄື່ອນທີ່?*

ແນວຄວາມຄິດຫຼັກແມ່ນການມີສະຖານທີ່ຮຽນຮູ້ຮ່ວມກັນ, ຊຸມຊົນມາເຕົ້າໂຮມກັນ ແລະ ເປີດໂອກາດໃຫ້ຊຸມຊົນທີ່ມີຂໍ້ຈໍາກັດໄດ້ເຂົ້າເຖິງການສຶກສາຂັ້ນພື້ນຖານ. ໂດຍຄະນະກໍາມະການຂອງສູນການຮຽນຮູ້ຊຸມຊົນເຄື່ອນທີ່ພວກເຮົາພະຍາຍາມເຮັດໃຫ້ມັນຍືນຍົງ ແລະ ມີສະຖານທີ່ສໍາລັບການຮຽນຮູ້ຕະຫຼອດຊີວິດ. ມັນເປັນການລວມເອົາທຸກຄົນ ນັບແຕ່ເດັກນ້ອຍຈົນເຖິງຜູ້ໃຫຍ່ເຂົ້າຮ່ວມ ແລະ ແບ່ງປັນຄວາມຮູ້ ແລະ ທັກສະ. ປະຈຸບັນນີແມ່ນໄດ້ສຸມໃສ່ຫ້ອງຮຽນສອງພາສາ ພາສາຂະເໝນ ແລະ Kavet ເພື່ອໃຫ້ຜູ້ຮຽນສາມາດໂອນເຂົ້າຮຽນໃນລະບົບສາມັນໄດ້.

### *ທ່ານຕັ້ງເປົ້າໝາຍໄວ້ແນວໃດແດ່?*

ສໍາລັບຕອນນີ້, ເປົ້າໝາຍຫຼັກແມ່ນໃຫ້ທຸກຄົນບໍ່ມີ ຫຼື ບໍ່ຖືກຈໍາກັດການຂົ້າເຖິງການສຶກສາ ແລະ ມີໂອກາດໃນການເຂົ້າຮ່ວມກິດຈະກໍາໃນສູນ. ແຕ່ເຮົາກໍຕ້ອງການເຫັນການເຊື່ອມໂຍງເຂົ້າສູ່ການດໍາລົງຊີວິດຂອງເຂົາເຈົ້າໄປພ້ອມກັນ ດັ່ງນັ້ນ ຄວາມຮູ້ ແລະ ທັກສະທີ່ເຂົາເຈົ້າໄດ້ຮັບຈາກສູນຈຶ່ງມີສ່ວນຊ່ວຍທັງໝົດໃນຊຸມຊົນ.



ນັກສຶກສາຝຶກງານທີ່ຫ້ອງການປະຈໍາປະເທດກໍາປູເຈຍ



# ທັກສະສັງຄົມສຳລັບຊາວໜຸ່ມ

*ດາລຸນີ ສີສຸລາດ, ດີວີວີ ອິນເຕີເນເຊິນແນວ ລາວ*



ຜູ້ບໍລິຫານໂຄງການຝຶກອົບຮົມທັກສະຊາວໜຸ່ມ

ທັກສະສັງຄົມ ໄດ້ຮັບຄວາມນິຍົມເປັນຢ່າງສູງໃນການອະພິປາຍກ່ຽວກັບການສຶກສາໃນທົ່ວໂລກໂດຍສະເພາະໃນຂົງເຂດອາຊີ. ແນວຄວາມຄິດນີ້ລວມທັງການຝຶກທັກສະສຳຄັນຫຼາຍຫຼາຍຢ່າງທີ່ຈຳເປັນສຳລັບຊາວໜຸ່ມເພື່ອຈະກ້າວເຂົ້າສູ່ສັດຕະວັດທີ 21 ເຊັ່ນ: ການເຮັດວຽກເປັນທີມ, ພາວະຄວາມເປັນຜູ້ນຳ, ການຕັດສິນໃຈ, ການຮູ້ຈັກຕົນເອງ, ການສື່ສານ ແລະ ການບໍລິຫານເວລາ. ຊາວໜຸ່ມຈະຕ້ອງສາມາດບໍລິຫານຈັດການກັບຄາມຂັດແຍ່ງໃຫ້ເກີດປະສິດທິພາບ ແລະ ຫາທາງອອກທີ່ສ້າງສັນເພື່ອປກ້ໄຂບັນຫາສິ່ງທ້າທາຍຕ່າງໆ.

ກົມພັດທະນາວິຊາຊີບຊາວໜຸ່ມ ທີ່ຂຶ້ນກັບສູນກາງຊາວໜຸ່ມລາວມີກິດຈະກຳຈັດຝຶກອົບຮົມໄລຍະສັ້ນໃຫ້ແກ່ຊາວໜຸ່ມໃນຂົງເຂດທີ່ແຕກຕ່າງກັນເຊັ່ນ: ຫຍິບເຄື່ອງ, ສ້ອມແປງລົດຈັກ ແລະ ລົດໃຫຍ່, ຄອມພິວເຕີ, ການປູກເຫັດ, ເສີມສວຍ ແລະ ການຕິດຕັ້ງໄຟຟ້າ ແລະ ລວມທັງພາສາອັງກິດ. ປະຈຸບັນສູນກາງຊາວໜຸ່ມມີສູນຝຶກອົບຮົມວິຊາຊີບທັງໝົດ 14 ສູນ ໃນຈຳນວນ 18 ແຂວງທົ່ວປະເທດ. ເຖິງຢ່າງໃດກໍຕາມ ເນື່ອງຈາກຂໍ້ຈຳກັດດ້ານງົບປະມານ, ການຝຶກອົບຮົມຈຶ່ງໄດ້ຈັດຂຶ້ນພຽງແຕ່ 9 ສູນ ຈາກທັງໝົດ 14 ສູນ. ການຮຽນຈົບຫຼັກສູດແມ່ນໃຊ້ເວລາ 3 - 4 ເດືອນ ແລະ ຄ່າທຳນຽມໃນການຮຽນແມ່ນມາຈາກນັກຮຽນເອງ ແລະ ສ່ວນໜຶ່ງມາຈາກການສະໜັບສະໜູນຂອງຄູ່ຮ່ວມພັດທະນາ. ໃນຂະນະທີ່ຊາວໜຸ່ມກຳລັງຜະເຊີນກັບຄວາມທ້າທາຍຄືເຂົາເຈົ້າຍັງຂາດທັກສະສັງຄົມ, ສູນກາງຊາວໜຸ່ມໄດ້ສະເໜີໃຫ້ ດີວີວີ ອິນເຕີເນເຊິນແນວ ສະໜັບສະໜູນແນວຄວາມຄິດຂອງ ທັກສະສັງຄົມ ເຂົ້າໃນການຝຶກອົບຮົມສຳລັບຊາວໜຸ່ມ. ດີວີວີ ອນເຕີເນເຊິນແນວ ແລະ ກົມພັດທະນາວິຊາຊີບຊາວໜຸ່ມໄດ້ມີສ່ວນຮ່ວມໃນໂຄງການເຊິ່ງໄດ້ຮັບທຶນສະໜັບສະໜູນຈາກ Sternsinger ຊື່ໂຄງການວ່າ "ທັກສະສັງຄົມສຳລັບຊາວໜຸ່ມ" ເຊິ່ງຈັດຝຶກອົບຮົມໃຫ້ກ່ຊາວໜຸ່ມໃນເຂດຊົນນະບົດ ພ້ອມກັນນັ້ນກໍເປັນການສ້າງຄວາມອາດສາມາດໃຫ້ແກ່ຄູຝຶກຂອງສູນກາງຊາວໜຸ່ມ.



ຈຸດປະສົງຫຼັກຂອງໂຄງການແມ່ນເພື່ອໃຫ້ກົມພັດທະນາວິຊາຊີບນຳໃຊ້ທັກສະທາງສັງຄົມເຂົ້າໃນແຜນງານການຝຶກອົບຮົມວິຊາຊີບ ໂດຍການນຳສະເໜີຄວາມເຂົ້າໃຈພື້ນຖານກ່ຽວກັບທັກສະທາງສັງຄົມໃຫ້ແກ່ຄູຝຶກໃນຂັ້ນແຂວງ ເພື່ອໃຫ້ຄູຝຶກສາມາດຈັດຝຶກອົບຮົມໃຫ້ແກ່ນັກຮຽນຂອງເຂົາເຈົ້າໄດ້. ໂຄງການນີ້ໄດ້ດຳເນີນການຝຶກອົບຮົມັກສະທາງສັງຄົມສຳລັບຊາວໜຸ່ມ ໃນ 5 ແຂວງເປົ້າໝາຍຂອງໂຄງການ:

- ຝຶກອົບຮົມຄູຝຶກຂອງສູນພັດທະນາວິຊາຊີບຊາວໜຸ່ມ ເຊິ່ງມີຄູຝຶກມາຈາກທົ່ວປະເທດ.
- ຝຶກອົບຮົມໃຫ້ແກ່ນັກຮຽນທີ່ສູນຝຶກອົບົມວິຊາຊີບຊາວໜຸ່ມ ດອນບອສໂກ ທີ່ນະຄອນຫຼວງວຽງຈັນ ໂດຍທີມງານຄູຝຶກທີ່ໄດ້ຜ່ານການຝຶກອົມຮົມ ເຊິ່ງກຸ່ມເປົ້າໝາຍແມ່ນນັກຮຽນ ແລະ ຄູຝຶກໃນສູນ ນັກຮຽນຢູ່ສູນແຫ່ງນີ້ແມ່ນມາຈາກຕ່າງແຂວງ.
- ຝຶກອົບຮົມໃຫ້ແກ່ນັກຮຽນໃນວິທະຍາໄລຄູ ແຂວງສະຫວັນນະເຂດ. ກຸ່ມເປົ້າໝາຍແມ່ນນັກສຶກສາທີ່ມາຈາກມະຫາວິທະຍາໄລສະຫວັນນະເຂດ, ວິທະຍາໄລຄູແຂວງະຫວັນນະເຂດ, ວິທະຍາໄລໄຊສົມບັດ, ວິທະຍາໄລວິທະຍາສາດສຸຂະພາບແຂວງສະຫວັນນະເຂດ ແລະ ສະມາຊິກຊາວໜຸ່ມແຂວງສະຫວັນນະເຂດ.
- ຝຶກອົບຮົມໃຫ້ແກ່ນັກຮຽນທີ່ໂຮງຮຽນວິຊາຊີບເມືອງເຊໂປນ, ແຂວງສະຫວັນນະເຂດ ແລະ ສະມາຊິກຊາວໜຸ່ມໃນເມືອງເຊໂປນ.
- ຝຶກອົບຮົມໃຫ້ແກ່ນັກຮຽນໃນໂຮງຮຽນວິຊາຊີບແບບປະສົມແຂວງສາລະວັນ ເຊິ່ງນບໍໄດ້ລວມມີຄູອາຈານໃນໂຮງຮຽນໄດ້ເຂົ້າຮ່ວມເພື່ອຝຶກອົບຮົມ ແລະ ທັງສັງເກດການ.

ການຝຶກອົບຮົມສຳລັບນັກຮຽນໄດ້ຮັບດຳເນີນການໂດຍກຸ່ມຄູຝຶກທີ່ໄດ້ຜ່ານການຝຶກອົບຮົມການເປັນຄູຝຶກ ແລະ ໄດ້ຮັບຄວາມຊ່ວຍເຫຼືອ ແລະ ອຳນວຍຄວາມສະດວກຈາກທີມງານຄູຝຶກຈາກ ດີວີວີ ອິນເຕີເນເຊິນແນວ ແລະ ສູນກາງຊາວໜູ່ ເພື່ອເປັນການພັດທະນາຂີດຄວາມສາມາດຂອງຄູຝຶກຈາກຂັ້ນແຂວງ ພ້ອມທັງເປັນການທົດສອງປຶ້ມຄູມືການຝຶກອົບຮົມທັກສະສັງຄົມໄປພ້ອມກັນ. ໃນນັ້ນ ເປົ້າໝາຍດຽວກັນແມ່ນສ້າງໃຫ້ຄູຝຶກເຂົ້າໃຈແນວຄວາມຄິດຂອງທັກສະທາງສັງຄົມ ເພື່ອໃຫ້ເຂົາເຈົ້າສາມາດດຳເນີນການຝຶກອົບຮົມໃນສະຖາບັນຂອງຕົນເອງໄດ້. ເຂົາເຈົ້າຄວນຮັຮູ້ວ່າທັກສະສັງຄົມສາມາດເປັນຫຼັກທີ່ຈະຊ່ວຍເຂົາເຈົ້າ ແລະ ນັກຮຽນໃນການດຳລົງຊີວິດປະຈຳວັນຕະຫຼອດຈົນເຖິງການເຮັດວຽກ ແລະ ການຈ້າງງານ.

ໂຄງການນີ້ຍັງໄດ້ຈັດທຳວີດີໂອ ທີ່ສະແດງເນື້ອໃນ ແລະ ຂອບແນວຄວາມຄິດຂອງທັກສະທາງສັງຄົມ ເພື່ອໃຫ້ຜູ້ເບິ່ງຮູ້ເຖິງແນວຄວາມຄິດຂອງທັກສະທາງ

ສັງຄົມ, ການຄິດວິເຄາະຢ່າງມີເຫດ ແລະ ຜົນ, ການຕັດສິນໃຈ ແລະ ການສື່ສານທີ່ມີປະສິດທິພາບ. ຄູຝຶກ/ຄູສອນ ສາມາດນຳໃຊ້ ວິດີໂອນີ້ເປັນສື່ການສອນ ເພື່ອສາມາດຖ່າຍທອດ ທັກສະ ສັງຄົມ ແລະ ຕົວຢ່າງທີ່ເໝາະສົມ ໃນກິດຈະວັດປະຈຳວັນ. ວິດີໂອນີ້ ຈະສື່ໃຫ້ກຸ່ມເປົ້າໝາຍເຂົ້າເຖິງໄດ້ ງ່າຍຂຶ້ນ ເພື່ອເປັນການສ້າງຄວາມ ເຂົ້າໃຈກ່ຽວກັບແນວຄິດຂອງ ທັກສະສັງຄົມໂດຍສະເພາະສຳລັບ ສະພາບແວດລ້ອມທີ່ບໍ່ອ່ານໜັງສື ເຊັ່ນໃນລາວ ທີ່ຍັງມີບັນຫາການ ກືກໜັງສື. ວິດີໂອດັ່ງກ່າວສາມາດ ເຂົ້າເບິ່ງໂດຍຜ່ານທາງ www.youtube.com ເຊິ່ງສາມາດເຂົ້າ ເບິ່ງໄດ້ໂດຍຜ່ານທາງຄອມພິວເຕີ ແລະ ໂທລະສັບມືຖື.

ທັກສະທາງສັງຄົມເປັນສິ່ງຈຳເປັນ ຫຼາຍສຳລັບກຸ່ມເປົ້າໝາຍທີ່ແຕກ ຕ່າງກັນບໍ່ພຽງແຕ່ສຳລັບນັກຮຽນ ຫຼື ຄູເທົ່ານັ້ນ ແຕ່ຍັງແນະນຳສຳລັບ ພະນັກງານໃນລະດັບຕ່າງໆ ເພື່ອ ເປັນການຂະຫຍາຍການຝຶກທັກສະນີ້ໄປຂະແໜງການອື່ນໆ ເພື່ອ ການເຮັດວຽກ ແລະ ຮ່ວມມື ໃນອະນາຄົດ.

# ສູນຂໍ້ມູນຂ່າວສານ

*ສົມຈິດ ພອນວິໄລ,*
ສູນພັດທະນາການສຶກສານອກໂຮງຮຽນ



*ຜູ້ປະສານງານ ປະຈຳສູນ ຂໍ້ມູນຂ່າວສານ*

ສູນພັດທະນາການສຶກສານອກໂຮງຮຽນ (ສພນ) ໄດ້ ຮັບການສະໜັບສະໜູນຈາກດີວີວີ ອິນເຕີເນເຊິນແນວ ສ້າງຕັ້ງສູນຂໍ້ມູນຂ່າວສານ ເຊິ່ງຕັ້ງຢູ່ໃນ ສພນ ໂດຍ ໄດ້ຮັບການອະນຸມັດຈາກທ່ານຫົວໜ້າກົມການສຶກສາ ນອກໂຮງຮຽນ ຕາມຂໍ້ຕົກລົງເລກທີ 1212/ກສນ, ໃນວັນທີ 8 ພະຈິກ 2016. ຈຸດປະສົງຂອງສູນຂໍ້ມູນ ຂ່າວສານແມ່ນເພື່ອເປັນການເກັບກຳຂໍ້ມູນ, ສົ່ງເສີມ ແລະ ສະໜອງຂໍ້ມູນກ່ຽວກັບການສຶກສາ ໂດຍສະເພາະແມ່ນການສຶກສານອກໂຮງຮຽນ ແລະ ການຮຽນຮູ້ຕະຫຼອດຊີວິດ. ເລີ່ມແຕ່ການສ້າງຕັ້ງສູນ ແມ່ນໄດ້ເອົາໃຈໃສ່ໃນການພັດທະນາຄວາມອາດ ສາມາດຂອງພະນັກງານ, ພ້ອມທັງຂະຫຍາຍສູນ ຂໍ້ມູນຂ່າວສານນີ້ໄປຍັງສູນການສຶກສານອກໂຮງຮຽນ ໃນພາກໃຕ້ ແລະ ພາກເໜືອ. ໃນປີ 2019 ສູນໄດ້ ຜະລິດວິດີໂອເພື່ອປະກອບເຂົ້າໃນການຝຶກອົບຮົມ ວິຊາຊີບ ແລະ ການປຸກຈິດສຳນຶກ. ຜະລິດວິດີໂອ ກ່ຽວກັບການເຮັດຟອຍດອກແຂມສຳລັບກຸ່ມ ເປົ້າໝາຍຂອງການສຶກສານອກໂຮງຮຽນ (ກສນ). ນອກຈາກນັ້ນ, ໄດ້ຜະລິດວິດີໂອກ່ຽວກັບການຮຽນຮູ້ ຕະຫຼອດຊີວິດ ເຊິ່ງໄດ້ຖືກແປມາຈາກພາສາອັງກິດ ເປັນພາສາລາວ ແລະ ອີກ 6 ບົດຄວາມກໍໄດ້ຖືກແປ ແລະ ພິມເຜີຍແຜ່, ວິດີໂອ ແລະ ບົດຄວາມເຫຼົ່ານີ້ ສາມາດເຂົ້າເບິ່ງໄດ້ໂດຍຜ່ານເວັບໄຊຂອງ ສພນ ແລະ ຊ່ອງ ຢູທູບ (youtube). ໂດຍເບິ່ງຕາມລິ້ງຂ້າງລຸ່ມນີ້:

- Website: https://nfedi.org/
- Facebook page: https://www.facebook.com/nfedc
- YouTube Channel: Search: Non-Formal Education Development Centre

ສູນຂໍ້ມູນຂ່າວສານກໍຍັງໄດ້ຈັດຝຶກອົບຮົມກ່ຽວກັບວິທີ ການນຳໃຊ້ Microsoft Access ສຳລັບ ພະນັກງານຂອງຫ້ອງສະໝຸດໃນ ສພນ ໂດຍເຊີນເອົາ ຊ່ຽວຊານຈາກກົມການສຶກສານອກໂຮງຮຽນມາເປັນ ຄູຝຶກ. ກອງປະຊຸມສ້າງຄວາມອາດສາມາດໃຫ້ແກ່ ນັກການສຶກສາຂັ້ນບ້ານ ແລະ ຄູຊັ້ນປະຖົມ ທີ່ບ້ານຫາດຊາຍຂາວ ໂດຍສຸມໃສ່ກິດຈະກຳສົ່ງເສີມ ການອ່ານສຳລັບເດັກນ້ອຍ. ກອງປະຊຸມຖອດຖອນ ບົດຮຽນປະຈຳປີ ຂອງ ກສນ ແລະ ການສົ່ງເສີມ ແລະ ຊຸກຍູ້ຊຸມຊົນແຫ່ງການຝຶກປະຕິບັດກໍໄດ້ຖືກຈັດຂຶ້ນ ເຊັ່ນກັນ. ອີງຕາມຕົວຢ່າງດັ່ງກ່າວ ສູນໄດ້ດຳເນີນ ການຝຶກອົບຮົມເພື່ອເປັນການສົ່ງເສີມກິດຈະກຳການ ອ່ານໃນສູນການຮຽນຮູ້ຊຸມຊົນສຳລັບນັກການສຶກສາ ໃນບ້ານ ແລະ ຄູຊັ້ນປະຖົມທີ່ເມືອງພື້ນ, ແຂວງວຽງຈັນ.

ເຖິງຢ່າງໃດກໍຕາມ ເນື່ອງຈາກສະຖານະການໃນລາວ ແລະ ໃນຫຼາຍປະເທດທົ່ວໂລກ ທີ່ກຳລັງຜະເຊີນໜ້າ ກັບການແຜ່ລະບາດຂອງພະຍາດ ໂຄວິດ-19 ການ ດຳເນີນກິດຈະກຳຂອງສູນຈຶ່ງໄດ້ຢຸດຊົ່ວຄາວ. ສະຖານະການນີ້ຍັງກໍ່ໃຫ້ເກີດບັນຫາອື່ນໆອີກຫຼາຍຢ່າງ ເຊັ່ນ: ລາຄາສິນຄ້າ, ວັດສະດຸ ອະປະກອນ ແລະ ອາຫານກໍເພີ່ມຂຶ້ນກວ່າປົກກະຕິ. ສິ່ງນີ້ສາມາດເຫັນ ໄດ້ໂດຍສະເພາະແມ່ນຈຳເປັນຕ້ອງໃສ່ຜ້າອັດປາກ ທາງສູນຈຶ່ງໄດ້ຜະລິດວິດີໂອກ່ຽວກັບການຫຍິບຜ້າອັດ ປາກໂດຍໃຊ້ຜ້າ ເພື່ອເປັນການປ້ອງກັນການຕິດເຊື້ອ ແລະ ຂີ້ຝຸ່ນ ເຊິ່ງອາດກໍ່ໃຫ້ເກີດຜົນເສຍຕໍ່ລະບົບຫາຍ ໃຈທັງໃນໄລຍະສັ້ນ ແລະ ໄລຍະຍາວ ເຊິ່ງໄດ້ເຜີຍແຜ່ ຢູ່ໃນ YouTube ແລະ Facebook. ປີນີ້ສູນໄດ້ວາງ ແຜນຂະຫຍາຍສູນຂໍ້ມູນຂ່າວສານທີ່ແຂວງຊຽງຂວາງ ໂດຍມີຈຸດປະສົງເພື່ອສົ່ງເສີມຊັບພະຍາກອນຂອງ ກສນໃນລະດັບທີ່ໃຫຍ່ຂຶ້ນ.ສຳລັບແຜນອື່ນໆລວມທັງ ແນວຄວາມຄິດໃນການສ້າງແບບສອບຖາມກ່ຽວກັບ ການປະເມີນຜົນການດຳເນີນການຂອງສູນຂໍ້ມູນຂ່າວ ສານ ສພນ ນັບຕັ້ງແຕ່ຖືກສ້າງຕັ້ງຂຶ້ນ ເພື່ອເປັນການ ທົບທວນ ແລະ ຕິດຕາມກິດຈະກຳໃນແຕ່ລະໄລຍະ ແລະ ຊ່ວຍກຸ່ມເປົ້າໝາຍເພື່ອໃຫ້ມີຄວາມຍືນຍົງ ຂຶ້ນຕື່ມ.

**ສິ່ງທີ່ໜ້າສົນໃຈ**
**Important Website in region**
www.aspbae.org
www.pria.org
www.seameocelll.org

**ສິ່ງພິມທີ່ໜ້າສົນໃຈ**
Adult Education and Development
AED 86 (2019): The good adult educator
AED 85: Role and Impact of Adult Education
AED 84: Inclusion and Diversity
AED 83: Skills and Competencies

**International Perspectives in Adult Education**
IPE 79(2019): The contribution of adult education to active participatory citizenship
IPE 77: Rethinking adult learning and education - Asia perspectives
IPE 78: Adult education as a key to development - challenges and success factors
IPE 76: Refugees: A challenge for adult education

**ຈົດໝາຍຂ່າວ**
The ASPBAE Bulletin access via www.aspbae.org
NEXUS - access via www.uil.unesco.org
Voice Rising - access via www.icae2.org
Education Policy Matters - via www.unescobkk.org

**ສິ່ງພິມໃໝ່**
**Handbook for NFE Facilitators**
**Soft Skills** Training Manual for Falicitator
**Soft Skills** Instructional Package
**Curriculum globALE i**n Lao language
**Compendium of the CLC Development**
**Lifelong Learning in Transformation**: Promissing Practices in Southeast Asia in Lao language
**DVV International Impact Report 2009-2015**


**ຈັດພິມໂດຍ ດີວີວີ ອິນເຕີເນເຊິນແນວ**
**ຮ່ວມກັບຄູ່ຮ່ວມພັດທະນາໃນ ສປປ ລາວ, ກໍາປູເຈຍ ແລະ**
**ໃນອາຊີໃຕ້ ແລະ ອາຊີຕາເວັນອອກສ່ຽງໃຕ້**

**ກອງບັນນາທິການ**: ປ.ອ. ກ້າ ສະເຫຼີມສຸກ, ພິລານີ ພິດສະໄໝ, ອຸ່ນເພັງ ຄໍາມັງ, ຂັນທອງ ອິນທະຈັກ
**ທີມງານບັນນາທິການ**: ດາລຸນີ ສີສຸລາດ, Richard Isaiah Peters, ດອກຄໍາ ຊົມສີຫາປັນຍາ, ສົມໃຈ ແກ້ວເມກ
**ບັນນາທິການ**: ໂຢຮັນ ແຣລເມັນ



**ດີວີວີ ອິນເຕີເນເຊິນແນວ**
ຫ້ອງການປະຈໍາພາກພື້ນອາຊີຕາເວັນອອກສ່ຽງໃຕ້
351/19 ຖະໜົນວັດນາກໃຫຍ່, ບ້ານທ່າພະລານໄຊ
ເມືອງສີສັດຕະນາກ
ຕູ້ ປ.ນ. 1215, ນະຄອນຫຼວງວຽງຈັນ, ສປປ ລາວ
ໂທ.: +856 21 315832-3
ແຟັກ: +856 21 312511
info@dvv-international.la
www.dvv-international.la


# Education for Everyone. Worldwide. Lifelong.